# ຮ່າງນະໂຍບາຍ ກ່ຽວກັບ ໝາກເຍົາ (*Jatropha curcas* L.)

**ລາຍລະອຽດ ກ່ຽວກັບ ໝາກເຍົາໂດຍຫຍໍ້ ແລະ ບົດບາດສຳຄັນໃນການເປັນພືດພະລັງງານ ຢູ່ໃນ ສປປ.ລາວ**

*LIRE (ສູນຄົ້ນຄວ້າ-ທົດລອງດ້ານພະລັງງານທົດແທນ) ແລະ LEAP ( ໂຄງການສົ່ງເສີມກະສິກຳ)*

*15 ມິຖຸນາ 2009*

ໂດຍ: Rietzler J., Vilavong S., Gaillard L., Jordan M., Bormann M., Miclaus N.

---

## I. *ພາກສະເໜີ*

ຈຸດປະສົງຂອງການຮ່າງນະໂຍບາຍ ສະບັບດັ່ງກ່າວນີ້ ກໍ່ເພື່ອສະຫຼຸບລວມໂດຍຫຍໍ້ ກ່ຽວກັບຂະບວນການພັດທະນາທາງດ້ານການປູກໝາກເຍົາໃນປະຈຸບັນ ໂດຍສະເພາະສະພາບການທາງດ້ານການປູກໝາກເຍົາຢູ່ໃນ ສປປ.ລາວ. ໃນຮ່າງນະໂຍບາຍດັ່ງກ່າວນີ້, ພວກເຮົາຈະໄດ້ນຳສະເໜີບາງບັນຫາເຊັ່ນ: ຂໍ້ມູນພື້ນຖານ ແລະ ປະຫວັດຄວາມເປັນມາຂອງປະເທດ, ຂໍ້ມູນກ່ຽວກັບໝາກເຍົາ (*Jatropha curcas* L.), ຄຳກ່າວຂານດ້ານອຸດສະຫະກຳການຜະລິດນ້ຳມັນກະຊວນຊີວະພາບ (Bio-diesel) ຈາກນ້ຳມັນໝາກເຍົາໃນປະຈຸບັນ ແລະ ສື່ຕ່າງໆ ທີ່ມີສ່ວນກ່ຽວພັນກັບໝາກເຍົາ ແລະ ຄວາມອາດສາມາດຂອງໝາກເຍົາ. ຄຳກ່າວຂານດັ່ງກ່າວຈະໄດ້ຖືກນຳມາປະເມີນ ແລະ ພິຈາລະນາໂດຍລະອຽດບົນພື້ນຖານປະສົບປະການ 3 ປີ ໃນ ສປປ.ລາວ ຂອງ LIRE ແລະ ຊ່ຽວຊານທີ່ເຮັດວຽກຕິດພັນກັບບັນຫາດັ່ງກ່າວ. ໃນການສຶກສາຄັ້ງນີ້, LIRE ໄດ້ທຳການລົງສຳຫຼວດພາກສະໜາມ ແລະ ເກັບກຳຂໍ້ມູນກ່ຽວກັບສະພາບການໃນປະຈຸບັນຂອງຜູ້ປະກອບການຂະໜາດນ້ອຍ. ຍ້ອນເຫດຜົນທີ່ວ່າ ໝາກເຍົາໄດ້ຖືກພິຈາລະນາໃຫ້ເປັນພືດອະເນກປະສົງ (ສາມາດນຳໃຊ້ເຂົ້າໃນຫຼາຍໆຈຸດປະສົງ), ທີມງານຂອງພວກເຮົາຈຶ່ງໄດ້ພິຈາລະນາ ແລະ ຕັດສິນໃຈທີ່ຈະນຳສະເໜີພຽງແຕ່ 3 ປະເດັນຕົ້ນຕໍຄື:

- ໝາກເຍົາ ໃນການເປັນພືດເສດຖະກິດ
- ໝາກເຍົາ ໃນການເປັນພືດພະລັງງານເພື່ອນຳໃຊ້ເຂົ້າໃນການຜະລິດນ້ຳມັນກາຊວນຊີວະພາບ
- ໝາກເຍົາ ສຳລັບການຜະລິດໄຟຟ້າໃນຊົນນະບົດ.

ຕໍ່ກັບປະເດັນຕ່າງໆທີ່ກ່າວມາຂ້າງເທິງນັ້ນ, ພວກເຮົາຈະທົບທວນຄືນທັງຈຸດດີ ແລະ ຈຸດອ່ອນ. ພ້ອມດຽວກັນນີ້, ພວກເຮົາຍັງຈະນຳສະເໜີກ່ຽວກັບລະດັບຂອງການຍອມຮັບ ແລະ ການພັດທະນາດ້ານການຕະຫຼາດ. ຍິ່ງໄປກວ່ານັ້ນ, ເນື່ອງຈາກວ່າຫຼາຍໆໂຄງການໄດ້ພິຈາລະນາວ່າ ໝາກເຍົາເປັນພືດທີ່ເໝາະສົມທີ່ຈະສົ່ງເສີມໃຫ້ເປັນພືດເສດຖະກິດ, ພວກເຮົາຈຶ່ງຈະນຳສະເໜີບາງບັນຫາທີ່ເດັ່ນໆ ແລະ ທ້າທາຍຊາວກະສິກອນຂອງລາວໃນປະຈຸບັນ. ຫຼັງຈາກນັ້ນ, ພວກເຮົາຈະໄດ້ກຳນົດບາງຊ່ອງທາງ ແລະ ໂອກາດເພື່ອການຍອມຮັບ ແລະ ການພັດທະນາການປູກໝາກເຍົາຢູ່ໃນ ສປປ.ລາວ ໄວ້ໃນຮ່າງນະໂຍບາຍສະບັບດັ່ງກ່າວນີ້.

---

## II. *ປະຫັວດຄວາມເປັນມາຂອງ ສປປ ລາວ ໂດຍຫຍໍ້*

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສປປ.ລາວ) ແມ່ນປະເທດທີ່ບໍ່ມີຊາຍແດນດິນກັບທະເລ ເຊິ່ງຕັ້ງຢູ່ໃຈກາງຂອງແຫຼມອິນດູຈີນ. ລາຍຮັບຕົ້ນຕໍຂອງປະເທດແມ່ນໄດ້ມາຈາກຊັບພະຍາກອນທຳມະຊາດ, ໂດຍສະເພາະແມ່ນພະລັງງານໄຟຟ້ານ້ຳຕົກ. ໃນປະຈຸບັນ ສປປ.ລາວ ໄດ້ຮັບການພັດທະນາ ແລະ ຂະຫຍາຍຕົວໄປໃນທາງທີ່ດີຂຶ້ນເຮັດໃຫ້ເກີດມີການປ່ຽນແປງໃໝ່ໄປໃນຫຼາຍໆດ້ານໃນທົ່ວປະເທດ. ອັດຕາການຈະເລີນເຕີບໂຕຂອງເສດຖະກິດ (ຜະລິດຕະພັນລວມຍອດພາຍໃນ) ແມ່ນຢູ່ໃນລະດັບ 7.5% ໃນປີ 2009[1].

ໃນວາລະຂອງກອງປະຊຸມໃຫຍ່ແຫ່ງຊາດ ໄດ້ມີການກຳນົດຍຸດທະສາດວ່າດ້ວຍການລົບລ້າງຄວາມທຸກຍາກ ແລະ ອັດຕາການຈະເລີນເຕີບໂຕຂອງເສດຖະກິດແຫ່ງຊາດ. ຈຸດປະສົງ ເພື່ອແນ່ໃສ່ການປົດປ່ອຍປະເທດອອກຈາກບັນຊີລາຍຊື່ຂອງບັນດາປະເທດທີ່ຖືກຈັດອັນດັບວ່າເປັນປະເທດດ້ອຍພັດທະນາ ໂດຍອີງການສະຫະປະຊາຊາດ (UN) ໃນປີ 2020[2]. ເພື່ອຕອບສະໜອງຕໍ່ກັບນະໂຍບາຍດັ່ງກ່າວໃຫ້ທັນຕາມກຳນົດເວລາທີ່ກຳນົດໄວ້ນັ້ນ, ລັດຖະບານໄດ້ເຮັດຫາທຸກວິທີທາງເພື່ອເຮັດໃຫ້ 90% ຂອງພົນລະເມືອງໄດ້ມີໄຟຟ້າໃຊ້ ແລະ 100% ຂອງພົນລະເມືອງໄດ້ນຳໃຊ້ນ້ຳສະອາດ. ເທັກໂນໂລຢີທາງດ້ານພະລັງງານທົດແທນໄດ້ດຶງດູດຄວາມສົນໃຈຂອງລັດລະບານລາວເປັນຢ່າງຍິ່ງ ນັບຕັ້ງແຕ່ພະລັງງານທົດແທນໄດ້ກາຍມາເປັນຜະລິດຕະພັນທີ່ສາມາດສົ່ງອອກໄດ້ [3] ແລະ ທັງສາມາດນຳໃຊ້ຢູ່ພາຍໃນປະເທດ ເພື່ອຫຼຸດຜ່ອນການນຳເຂົ້າພະລັງງານຈາກຕ່າງປະເທດ.



ຮູບພາບ: ຮ້ານຈຳໜ່າຍນ້ຳມັນແອັດຊັງ, ກາຊວນ ແລະ ນ້ຳມັນກາດ ຢູ່ໃນເຂດຊົນນະບົດ

ບັນຫາໜຶ່ງທີ່ລັດຖະບານລາວເອົາໃຈໃສ່ ແລະ ກຳລັງຫາວິທີແກ້ໄຂກໍ່ຄື: ການນຳເຂົ້ານ້ຳມັນຈາກຕ່າງປະເທດ 100%. ໃນ ເດືອນພະຈິກ ປີ 2008 ທ່າມກາງວິກິດການນ້ຳມັນທີ່ມີລາຄາແພງ, ລັດຖະບານລາວໄດ້ສຸມທຸກກຳລັງແຮງເພື່ອຊອກຫາວິທີທາງໃນການແກ້ໄຂບັນຫາດັ່ງກ່າວ ໂດຍສົ່ງເສີມໃຫ້ມີການຜະລິດນ້ຳມັນ ກາຊວນຊີວະພາບເພື່ອນຳໃຊ້ພາຍໃນປະເທດ[4].

ໃນປະຈຸບັນ, ເສດຖະກິດຂອງປະເທດລາວໂດຍສ່ວນໃຫຍ່ແລ້ວແມ່ນອີງໃສ່ການລົງທຶນຂອງຕ່າງປະເທດໃນຂະແໜງການຕ່າງໆ ເຊັ່ນ: ພະລັງງານໄຟຟ້ານ້ຳຕົກ, ການຄົ້ນຄົ້ນບໍ່ແຮ່, ແລະ ການກໍ່ສ້າງ. ການຜະລິດກະສິກຳກໍ່ຖືໄດ້ວ່າເປັນຂະແໜງການໜຶ່ງທີ່ນັກລົງທຶນໄດ້ໃຫ້ຄວາມສົນໃຈ ແລະ ກ້າວເຂົ້າມາລົງທຶນໃສ່ກັບຂະແໜງການດັ່ງກ່າວ. ການຜະລິດກະສິກຳແບບກຸ້ມຕົນເອງຍັງມີລັກສະນະເດັ່ນ ໂດຍສະເພາະແມ່ນການຜະລິດເຂົ້າກວມເອົາ 30% ຂອງຜະລິດຕະພັນລວມຍອດພາຍໃນ ແລະ ກວມເອົາ 80% ຂອງການປະກອບອາຊີບຂອງປະຊາຊົນທັງໝົດຢູ່ໃນ ສປປ.ລາວ[5]. ເນື່ອງຈາກການປະສົບກັບວິກິດການທາງດ້ານອາຫານໂລກ, ນັກລົງທຶນທັງຫຼາຍ ໄດ້ເລັ່ງເຫັນຄວາມອາດສາມາດອັນຍິ່ງໃຫຍ່ໃນດ້ານການດຳເນີນທຸລະກິດ ດ້ານການຜະລິດກະສິກຳຢູ່ໃນ ສປປ. ລາວ ເຊິ່ງໃນນັ້ນພວກເຂົາໄດ້ສູມໃສ່ພືດອາຫານ, ພືດທັນຍາຫານ ແລະ ພືດອຸດສະຫະກຳເປັນຕົ້ນຕໍ ເຊັ່ນ: ສາລີ, ມັນຕົ້ນ, ໄມ້ສັກ, ຢາງພາລາ ແລະ ອື່ນໆ.

ພືດພະລັງງານ ທີ່ສາມາດນຳໃຊ້ເຂົ້າໃນອຸດສະຫະກຳການຜະລິດນ້ຳມັນກາຊວນຊີວະພາບ ກໍ່ໄດ້ກາຍມາເປັນພືດໜຶ່ງທີ່ນັກລົງທຶນໄດ້ໃຫ້ຄວາມສົນໃຈ ແລະ ຕ້ອງການທີ່ຈະເຂົ້າມາລົງທຶນຢູ່ໃນ ສປປ.ລາວ. ໃນປະຈຸບັນ, ມີນັກລົງທຶນຈາກຫຼາຍໆປະເທດໄດ້ເຂົ້າມາລົງທຶນໃສ່ໃນການປູກໝາກເຍົາ ເຊັ່ນ: ຈີນ, ໄທ, ຫວຽດນາມ, ເກົາຫຼີ, ອິດຕາລີ, ຝຣັ່ງ, ແລະ ຍີ່ປຸ່ນ. ໃນຂະນະທີ່ພວກເຮົາລົງສຳຫຼວດຂໍ້ມູນຕົວຈິງ ເພື່ອປະກອບເຂົ້າໃນເອກະສານສະບັບນີ້, ພວກເຮົາກໍ່

---

[1] www.vientianetime.org.la

[2] www.undplao.org

[3] www.cia.gov/library/publications/the-world-factbook/geos/la.html

[4] ກະຊວງອຸດສະຫະກຳ ແລະ ບໍ່ແຮ່

[5] www.cia.gov/library/publications/the-world-factbook/geos/la.html

ໄດ້ພົບວ່າບັນດານັກລົງທຶນຕ່າງໆທີ່ກ່າວມາຂ້າງເທິງນັ້ນຍັງຄົງພົບກັບບັນຫາທີ່ຫຍຸ້ງຍາກ ແລະ ມີສິ່ງທ້າທາຍຫຼາຍຢ່າງຕໍ່ກັບວຽກງານການຜະລິດຂອງເຂົາເຈົ້າເຊັ່ນ: (i) ຮູບແບບຂອງການລົງທຶນທີ່ບໍ່ເໝາະສົມ, (ii) ຂາດຄວາມເຂົ້າໃຈຕໍ່ກັບສະ ພາບຂອງແຕ່ລະທ້ອງຖິ່ນໃນລາວ, (iii) ຂາດການສຶກສາ ແລະ ປະສົບປະການໃນດ້ານການປູກໝາກເຢົາ, ແລະ (iv) ການຄາດຄະເນເຖິງຜົນໄດ້ຮັບເກີນຄວາມເປັນຈິງ. ຍຸດທະສາດໃນການວາງແຜນການປູກ ແລະ ການດຳເນີນທຸລະກິດ (ຮູບແບບການປູກ ແລະ ການເຮັດສັນຍາຜູກພັນຮ່ວມກັບປະຊາຊົນ) ຍັງພົບກັບຂໍ້ຫຍຸ້ງຍາກຫຼາຍປະການສົ່ງຜົນໃຫ້ຜົນຜະລິດແກ່ນໝາກເຢົາບໍ່ໄດ້ຕາມຄວາມຕ້ອງການ.

---

## III. *ປະຫວັດຄວາມເປັນມາຂອງໝາກເຢົາໂດຍຫຍໍ້*

ໝາກເຢົາຖືກຈັດເປັນໄມ້ພຸ່ມເຕັ້ຍມີຄວາມສູງຕັ້ງແຕ່ 5 ຫາ 7 ແມັດ, ເນື້ອໄມ້ອ່ອນ ແລະ ມີອາຍຸຍືນເຖິງ 40 ປີ[6], ມີຖິ່ນກຳເນີດໃນປະເທດໃນແຖບທະວີບອາເມລິກາກາງ ແລະ ອາເມລິກາໄຕ້ເຊັ່ນ: ປະເທດແມັກຊິກໂກ ແລະ ປາລາກວຍ. ໝາກເຢົາສາມາດເກີດຂຶ້ນໄດ້ໃນດິນທີ່ມີສະພາບຄວາມແຫ້ງແລ້ງ ແລະ ເປັນກົດ. ພໍ່ຄ້າຊາວໂປຕູເກດໄດ້ນຳເອົາໝາກເຢົາເຂົ້າມາໃນສ່ວນຕ່າງໆຂອງໂລກໃນສັດຕະວັດທີ XVI [7] . ໝາກເຢົາສາມາດນຳມາຂະຫຍາຍພັນໄດ້ແບບມີເພດ (ດ້ວຍແກ່ນ) ແລະ ບໍ່ມີເພດ (ດ້ວຍງ່າ ຫຼື ເນື້ອເຍື່ອ). ຕົ້ນໝາກເຢົາຈະເລີນເຕີບໂຕໂດຍອາໃສຮາກແກ້ວ ແລະ ຮາກທີ່ແຕກອອກທາງດ້ານຂ້າງຈຳນວນ 4 ຮາກ. ຮາກແກ້ວຈະເປັນໂຕຊ່ວຍດູດເອົານ້ຳ ແລະ ສານອາຫານທີ່ມີຢູ່ໃນຊັ້ນໄຕ້ດິນທີ່ເລິກລົງໄປ ແລະ ຍັງຊ່ວຍຍຶດເກາະລຳຕົ້ນໄວ້ກັບດິນ. ຮາກທີ່ແຕກອອກມາຈາກດ້ານຂ້າງຈະເຮັດໜ້າທີ່ຊ່ວຍປ້ອງກັນການເຊາະເຈື່ອນຂອງໜ້າດິນ.

ຕົ້ນໝາກເຢົາຈັດເປັນພືດທີ່ມີທັງ 2 ເພດ ຢູ່ໃນຕົ້ນດຽວກັນ (ດອກຜູ້ ແລະ ດອກແມ່ ຢູ່ໃນຊໍ່ດຽວກັນ). ຕົ້ນໝາກເຢົາຈະສາມາດໃຫ້ຜົນຜະລິດໄດ້ ປະມານ 1-3 ຄັ້ງ ຕໍ່ ປີ ຂຶ້ນຢູ່ກັບປະລິມານນ້ຳຝົນ ແລະ ອຸນຫະພູມ. ພາຍຫຼັງທີ່ໄດ້ຮັບການປະສົມເກສອນແລ້ວ, ຕົ້ນໝາກເຢົາຈະໃຫ້ໝາກເຊິ່ງຈະລວມຕົວກັນຢູ່ເປັນພວງ. ແກ່ນຂອງໝາກເຢົາປະກອບມີສານພິດຊື່ວ່າ: ‘phorbol esters ແລະ curcin’ ເຊິ່ງສານພິດຊະນິດນີ້ເປັນອັນຕະລາຍເມື່ອ ຄົນ ຫຼື ສັດ ກິນເຂົ້າໄປໂດຍທີ່ບໍ່ຜ່ານຂະບວນການປຸງແຕ່ງ. ຈົນມາຮອດປະຈຸບັນນີ້, ຍັງບໍ່ທັນມີການພັດທະນາເຄື່ອງຈັກສຳລັບການເກັບກູ້ຜົນຜະລິດໝາກເຢົາ. ການເກັບຜົນຜະລິດຂອງໝາກເຢົາຍັງຄົງໃຊ້ແຮງງານຄົນ ເຊິ່ງມັນເຮັດໃຫ້ເສຍເວລາ ແລະ ແຮງງານ ເນື່ອງຈາກຕົ້ນໝາກເຢົາຈະໃຫ້ຜົນຜະລິດບໍ່ພ້ອມກັນ. ແກ່ນໝາກເຢົາປະກອບມີນ້ຳມັນປະມານ 30-40% ເຊິ່ງສາມາດໃຊ້ແທນນ້ຳມັນກາຊວນໄດ້ໂດຍກົງກັບຈັກກາຊວນຮອບຊ້າ ຫຼື ໃຊ້ເປັນວັດຖຸດິບຫຼັກສຳລັບການຜະລິດເປັນນ້ຳມັນກາຊວນຊີວະພາບ (ໄບໂອດີໂຊ). ຜົນຜະລິດແກ່ນຕໍ່ຕົ້ນ ຈະໄດ້ຫຼາຍໜ້ອຍພຽງໃດນັ້ນ ແມ່ນຂຶ້ນຢູ່ກັບສະພາບແວດລ້ອມ, ສາຍພັນ ແລະ ການຈັດການທີ່ເໝາະສົມ.

ຄວາມສົນໃຈຕໍ່ກັບການຜະລິດນ້ຳມັນກາຊວນຊີວະພາບຈາກນ້ຳມັນໝາກເຢົາ ໄດ້ເລີ້ມຕົ້ນຂຶ້ນໃນລາວປີ 2005 ພາຍຫຼັງທີ່ໄດ້ມີການລິເລີ່ມປຶກສາຫາລືເພື່ອສົ່ງເສີມການຜະລິດນ້ຳມັນກາຊວນຊີວະພາບຈາກນ້ຳມັນໝາກເຢົາ ໃນກຸ່ມນັກທຸລະກິດທີ່ມີຊື່ສຽງໂດ່ງດັງ. ຍົກຕົວຢ່າງ ເຊັ່ນ: Diamler Benz ຫຼື D1.

ໝາກເຢົາ ໄດ້ກາຍມາເປັນພືດທີ່ທຸກຄົນໃຫ້ຄວາມສົນໃຈເປັນພິເສດ ຫຼື ເວົ້າໄດ້ວ່າ ‘ເປັນໄມ້ພຸ່ມມະຫັດສະຈັນ’ ກໍ່ວ່າໄດ້. ເຫດຜົນກໍ່ເພາະວ່າ ໝາກເຢົາສາມາດຈະເລີນເຕີບໂຕຂຶ້ນໄດ້ໃນພື້ນທີ່ດິນທີ່ມີຄວາມອຸດົມສົມບູນຕ່ຳ ແລະ ເປັນຊ່ອງທາງໃໝ່ສຳລັບຊາວກະສິກອນຂະໜາດນ້ອຍ ທີ່ຈະມີໂອກາດໃນການສ້າງລາຍຮັບ ແລະ ຈະໄດ້ມີໂອກາດກ້າວຂຶ້ນມາເປັນ ‘ຊາວກະສິກອນທີ່ສາມາດຜະລິດພະລັງງານ’. ໃນທາງກົງກັນຂ້າມກັບການເປັນອັນຕະລາຍຕໍ່ກັບຄົນ ແລະ ສັດ, ສານພິດທີ່ມີຢູ່ໃນສ່ວນຕ່າງໆຂອງຕົ້ນໝາກເຢົາເຮັດໃຫ້ພວກມັນຖືກພິຈາລະນາວ່າເປັນພືດພະລັງງານທີ່ຫາຍາກ ແລະ ມີລາຄາຄືກັບພືດທີ່ໃຫ້ນ້ຳມັນຊະນິດອື່ນໆ. ຄວາມວິຕົກກັງວົນໃນດ້ານການນຳໃຊ້ນ້ຳມັນພືດ (ເຊັ່ນ: ນ້ຳມັນປາມ, ນ້ຳມັນຖົ່ວເຫຼືອງ) ເປັນວັດຖຸດິບສຳລັບການຜະລິດນ້ຳມັນກະຊວານຊີວະພາບໄດ້ ເພີ້ມສູງຂຶ້ນ ເນື່ອງຈາກລາຄານ້ຳມັນດິບທີ່ໄດ້ຈາກພືດດັ່ງກ່າວໄດ້ເພີ້ມສູງຂຶ້ນຕາມລາຄາຂອງອາຫານໃນທ້ອງຕະຫຼາດ. ດ້ວຍເຫດຜົນດັ່ງກ່າວນີ້, ນັກລົງທຶນຈຶ່ງມີຄວາມຫວັງວ່າໝາກເຢົາຈະກາຍເປັນພືດພະລັງງານອັນໃໝ່ ສຳລັບການຜະລິດນ້ຳມັນກະຊວນຊີວະພາບທີ່ສັງຄົມຍອມຮັບໄດ້. ຖ້າຫາກວ່າຕົ້ນໝາກເຢົາສາມາດນຳມາປູກໄດ້ໃນດິນທີ່ມີສະພາບເຊື່ອມໂຊມ, ພວກມັນກໍ່ຈະກາຍມາເປັນພືດທີ່ສາມາດປູກເພື່ອການອະນຸລັກຮັກສາສິ່ງແວດລ້ອມ.

---

## IV. *ຄຳກ່າວຂານກ່ຽວກັບໝາກເຢົາ*

ໃນປະຈຸບັນ, ຜູ້ປະກອບການອຸດສະຫະກຳຈຳນວນຫລາຍໄດ້ມີການກ່າວຂານກັນຢ່າງຫຼາກຫຼາຍກ່ຽວກັບໝາກເຢົາ ພ້ອມທັງພິຈາລະນາໃຫ້ມີການນຳໃຊ້ໝາກເຢົາຄືກັບພືດເສດຖະກິດອື່ນໆ. ໃນຂະນະດຽວກັນ, ຄຳກ່າວຂານ ແລະ ການຊົມໃຊ້ດັ່ງກ່າວນັ້ນບໍ່ໄດ້ເປັນໄປຕາມຄວາມເປັນຈິງ ໂດຍສະເພາະຢູ່ໃນເງື່ອນໄຂຂອງ ສປປ.ລາວ. ໃນເອກະສານສະບັບນີ້, ພວກເຮົາໄດ້ສະຫຼຸບລວມ ແລະ ນຳສະເໜີໂດຍຫຍໍ້ ກ່ຽວກັບ ສະພາບການປະຈຸບັນກ່ຽວກັບຄຳກ່າວຂານຕ່າງໆນາໆ ຕໍ່ກັບອຸດສະຫະກຳການຜະລິດນ້ຳມັນກາຊວນຊີວະພາບຈາກນ້ຳມັນໝາກເຢົາ ແລະ, ບາງຄວາມຮູ້ ແລະ ປະສົບການທີ່ເດັ່ນໆທີ່ LIRE ໄດ້ຮັບໃນໄລຍະຜ່ານມາ ຕະຫຼອດຮອດຄວາມວິຕົກກັງວົນຕໍ່ກັບຄຳກ່າວຂານຕ່າງໆທີ່ມີຕໍ່ໝາກເຢົາ.

**ຄຳກ່າວຂານທີ່ວ່າ: ໝາກເຢົາແມ່ນພືດທີ່ສາມາດປູກເປັນເສດ ຖະກິດ ແລະ ສ້າງລາຍຮັບໄດ້ຢ່າງຈະແຈ້ງ**

ໝາກເຢົາບໍ່ແມ່ນພືດທີ່ໄດ້ຮັບການປັບປຸງພັນ ແລະ ຄວາມອາດສາມາດທາງດ້ານພັນທຸກຳທີ່ຈະໄດ້ຮັບການປັບປຸງ ເພື່ອໃຫ້ສາມາດນຳໄປປູກໄດ້ໃນຫຼາຍໆທ້ອງຖິ່ນຍັງບໍ່ທັນໄດ້ຮັບການຄົ້ນຄວ້າ ແລະ ຢືນຢັນ. ສຳລັບຄວາມພະຍາຍາມໃນການປັບປຸງພັນພືດເສດຖະກິດຊະນິດອື່ນໆທີ່ສຳຄັນ ເຊັ່ນ: ເຂົ້າ, ສາລີ, ມັນຕົ້ນ... ແມ່ນມີສູງ. ຈຸດປະສົງກໍ່ເພື່ອແນ່ໃສ່ການປັບປຸງໃຫ້ໄດ້ສາຍພັນໃໝ່ທີ່ມີຄຸນນະພາບດີຂຶ້ນ ແລະ ເຮັດໃຫ້ພວກມັນມີຄວາມເໝາະສົມທີ່ຈະນຳໄປປູກໄດ້ໃນຫຼາຍໆພື້ນທີ່. ໃນປະຈຸບັນ, ບໍລິສັດທີ່ດຳເນີນທຸລະກິດໃນດ້ານການປັບປຸງພັນພືດຫຼາຍແຫ່ງ ໄດ້ກຳລັງພະຍາຍາມທີ່ຈະປັບປຸງ ແລະ ພັດທະນາສາຍພັນໝາກເຢົາໃຫ້ມີຈຸດເດັ່ນຂຶ້ນມາໃນຫຼາຍໆດ້ານ ເຊັ່ນ: ທົນທານຕໍ່ສັດຕູພືດ ແລະ ຈະເລີນເຕີບໂຕດີ. ເຖິງແນວໃດກໍ່ຕາມ, ຄວາມພະຍາຍາມດັ່ງກ່າວແມ່ນຕ້ອງໃຊ້ເວລາຍາວນານພໍສົມຄວນ ແລະ ການທີ່ຈະນຳເອົາແກ່ນພັນທີ່ໄດ້ຮັບຈາກການປັບປຸງໃນລຸ້ນທຳອິດໄປປູກ ເພື່ອໃຫ້ໄດ້ລຸ້ນຕໍ່ໆໄປ ກໍ່ຖືໄດ້ວ່າຍັງຕ້ອງໃຊ້ເວລາອີກຫຼາຍປີ. ບໍລິສັດທີ່ດຳເນີນທຸລະກິດດ້ານການປັບປຸງພັນທີ່ມີບົດບາດສຳຄັນໃນປະຈຸບັນນີ້ໄດ້ແກ່: ວິທະຍາສາດພັນພືດ D1 ແລະ ມະຫາວິທະຍາໄລວາເກັນນິງຂອງປະເທດເນເທີແລນ.

ໃນກໍລະນີຂອງປະເທດລາວ, ຄວາມຮູ້ກ່ຽວກັບການຂະຫຍາຍພັນໝາກເຢົາຍັງຖືໄດ້ວ່າມີຂໍ້ຈຳກັດ. LIRE ກໍ່ເປັນອີກໜ່ວຍງານໜຶ່ງ ທີ່ກຳລັງດຳເນີນການສຶກສາຄົ້ນຄວ້າກ່ຽວກັບການປັບປຸງພັນໝາກເຢົາໂດຍການສ້າງສວນທົດລອງຂະໜາດນ້ອຍເພື່ອໃຊ້ເປັນບ່ອນຂະຫຍາຍພັນໝາກເຢົາທີ່ນຳມາຈາກທົ່ວທຸກແຂວງຂອງປະເທດລາວ. ແຕ່ເຖິງຢ່າງໃດກໍ່ຕາມ, ໂຄງການດັ່ງກ່າວກໍ່ຍັງຄົງດຳເນີນໄປໃນຮູບແບບ ເພື່ອການສຶກສາຫາຄວາມຮູ້ຫຼາຍກ່ວາການທີ່ຈະສາມາດຜະລິດແນວພັນໃໝ່ອອກມາໄດ້. ວຽກງານດັ່ງກ່າວນອກຈາກຈະໃຊ້ເວລາແລ້ວຍັງຕ້ອງໃຊ້ງົບປະມານຢ່າງຫຼວງຫຼາຍອີກດ້ວຍ.

**ຄຳກ່າວຂານທີ່ວ່າ: ໝາກເຢົາສາມາດນຳມາປູກໃນດິນທີ່ມີສະພາບເຊື່ອມໂຊມ**

ໝາກເຢົາສາມາດຈະເລີນເຕີບໂຕໄດ້ດີ ໃນດິນທີ່ມີສະພາບຄວາມອຸດົມສົມບູນຕ່ຳ, ແຕ່ມັນກໍ່ຍັງຄົງຕ້ອງການສານອາຫານໃນດິນທີ່ເໝາະສົມເພື່ອການຈະເລີນເຕີບໂຕ ແລະ ການໃຫ້ຜົນຜະລິດທີ່ສູງກວ່າເຊັ່ນດຽວກັນກັບພືດຊະນິດອື່ນໆ.

ໃນກໍລະນີຂອງປະເທດລາວ, ຕົ້ນໝາກເຢົາຖືໄດ້ວ່າເປັນພືດທີ່ມີມາຕັ້ງແຕ່ດົນນານແລ້ວເຊິ່ງປະຊາຊົນນິຍົມນຳມາປູກເພື່ອເຮັດເປັນຮົ້ວຂຽວ (ຮົ້ວທີ່ມີຊີວິດ) ແລະ ບາງຄັ້ງກໍ່ປູກເປັນພືດເສດຖະກິດ. ຖ້າຈະເວົ້າເຖິງພືດເສດຖະກິດແລ້ວ, ຜົນຜະລິດທີ່ສູງຈະເປັນສິ່ງຕັດສິນວ່າຜູ້ປະກອບການ ຫຼື ຊາວກະສິກອນຈະສາມາດໄດ້ຮັບກຳໄລ ຫຼື ບໍ່. ດັ່ງນັ້ນ, ຊາວກະສິກອນຈຶ່ງຕ້ອງມີການເລືອກ

---

[6] Dr. Joachim Heller, Physic Nut, 1996, www.bioversityinternational.org/publications/pdf/161.pdf
[7] Claim and Facts on Jatropha, University of Wageningen www.library.wwr.nl/way/bestanden/clc/1858843.pdf

ສະຖານທີ່ທີ່ເໝາະສົມສໍາລັບການປູກໝາກເຍົາ. LIRE ໄດ້ເຮັດການສຶກສາຄົ້ນຄວ້າທົດລອງກ່ຽວກັບອິດທິພົນທີ່ມີຕໍ່ຜົນຜະລິດຂອງໝາກເຍົາທີ່ປູກໃນພື້ນທີ່ດິນທີ່ບໍ່ດີ ແລະ ໃຫ້ປຸ໋ຍທີ່ແຕກຕ່າງກັນ. ຜົນການທົດລອງໃນເບື້ອງຕົ້ນ ແລະ ຍັງບໍ່ເປັນທາງການໄດ້ຢັ້ງຢືນອອກມາວ່າ: ຕົ້ນໝາກເຍົາມີປະຕິກິລິຍາໃນທາງບວກຕໍ່ການໃສ່ປຸ໋ຍ (ສະແດງຄວາມແຕກຕ່າງທາງດ້ານການຈະເລີນເຕີບໂຕ ແລະ ການໃຫ້ຜົນຜະລິດເມື່ອປຽບທຽບກັບຕົ້ນທີ່ບໍ່ໃສ່ປຸ໋ຍ). ດັ່ງນັ້ນ, ຖ້າຫາກວ່າໝາກເຍົາທີ່ຖືກນໍາໄປປູກໃນພື້ນທີ່ດິນທີ່ມີຄວາມອຸດົມສົມບູນຕໍ່າ, ຜູ້ປູກຄວນມີການໃສ່ປຸ໋ຍເພື່ອໃຫ້ໄດ້ຮັບຜົນຜະລິດທີ່ສູງຂຶ້ນ.


ຮູບພາບ: ຕົ້ນໝາກເຍົາທີ່ຈະເລີນເຕີບໂຕໃນດິນທີ່ມີຄວາມອຸດົມສົມບູນຕໍ່າ

**ຄໍາກ່າວຂານທີ່ວ່າ: ຕົ້ນໝາກເຍົາສາມາດໄດ້ໃນດິນທຸກປະເພດ/ທຸກສະພາບແວດລ້ອມ**

ໝາກເຍົາສາມາດຈະເລີນເຕີບໂຕໄດ້ໃນຫຼາຍສະພາບພື້ນທີ່, ແຕ່ເຖິງຢ່າງໃດກໍ່ຕາມ, ຄວນມີການພິຈາລະນາເບິ່ງສະພາບແວດລ້ອມກ່ອນທີ່ຈະລົງມືປູກ ບໍ່ດັ່ງນັ້ນໝາກເຍົາຈະຈະເລີນເຕີບໂຕຊ້າ, ໃຫ້ຜົນຜະລິດແກ່ນໜ້ອຍ ແລະ ຖືກສັດຕູທໍາລາຍໄດ້ງ່າຍ. ຕົ້ນໝາກເຍົາບໍ່ສາມາດທົນທານຕໍ່ສະພາບນໍ້າກ້ານ,ແຕ່ພັດອາກາດທີ່ຮ້ອນຊຸ່ມ. ຍິ່ງໄປກວ່ານັ້ນ, ດິນທີ່ມີລັກສະນະດິນໜຽວ ຫຼື ດິນຕົມຈະບໍ່ເໝາະສົມກັບການປູກໝາກເຍົາເນື່ອງຈາກຮາກຂອງມັນບໍ່ສາມາດທີ່ຈະຂະຫຍາຍຕົວໄດ້ດີ. ພື້ນທີ່ທີ່ມີຄວາມຊຸ່ງຕໍ່ນໍ້າຖ້ວມຂັງກໍ່ບໍ່ເໝາະສົມກັບການປູກໝາກເຍົາເຊັ່ນດຽວກັນ. ຕົ້ນໝາກເຍົາຈະສາມາດຈະເລີນເຕີບໂຕໄດ້ດີໃນດິນຊາຍ ແລະ ດິນທີ່ມີອາກາດຖ່າຍເທດີ. ໂດຍທົ່ວໄປແລ້ວ, ຄວນຄັດເລືອກສະຖານທີ່ທີ່ມີລັກສະນະຄ້າຍຄືກັບສະຖານທີ່ທີ່ເປັນຖິ່ນກໍາເນີດ ຫຼື ສະຖານທີ່ທີ່ຕົ້ນໝາກເຍົາຈະເລີນເຕີບໂຕໄດ້ດີ.

ປະເດັນສໍາຄັນອັນອື່ນໆທີ່ກ່ຽວພັນກັບດິນ/ສະພາບແວດລ້ອມ ກໍ່ຄືເຕັກນິກ ແລະ ວິທີການໃນການປູກ. ດັ່ງທີ່ໄດ້ກ່າວມາຂ້າງເທິງນັ້ນ, ຕົ້ນໝາກເຍົາສາມາດຂະຫຍາຍພັນໄດ້ດ້ວຍແກ່ນ ແລະ ທ່ອນພັນ. ການຂະຫຍາຍພັນດ້ວຍທ່ອນພັນຈະເຮັດໃຫ້ຕົ້ນໝາກເຍົາທີ່ເກີດຂຶ້ນໃໝ່ບໍ່ມີຮາກແກ້ວ ແລະ ບໍ່ສາມາດດູດນໍ້າຈາກພື້ນດິນທີ່ເລິກໄດ້ດີ. ໂດຍສະເພາະໃນສະພາບອາກາດທີ່ແຫ້ງແລ້ງ, ຕົ້ນໝາກເຍົາທີ່ຂະຫຍາຍພັນດ້ວຍງ່າອາດຈະບໍ່ທົນຕໍ່ສະພາບຄວາມແຫ້ງແລ້ງໄດ້. ໃນທາງກົງກັນຂ້າມ, ຜົນການສຶກສາໃນເບື້ອງຕົ້ນກ່ຽວກັບດິນທີ່ມີຄວາມຊຸ່ມຊື່ນສູງໄດ້ສະແດງອອກມາວ່າ: ຕົ້ນໝາກເຍົາທີ່ຂະຫຍາຍພັນດ້ວຍທ່ອນພັນສາມາດຈະເລີນເຕີບໂຕໄດ້ດີກວ່າຕົ້ນໝາກເຍົາທີ່ຂະຫຍາຍພັນດ້ວຍແກ່ນ.ເຖິງແນວໃດກໍ່ຕາມ, ກໍ່ຍັງຕ້ອງລໍຖ້າຜົນການວິເຄາະທາງວິທະຍາສາດເພື່ອຢັ້ງຢືນຜົນດັ່ງກ່າວຢ່າງຊັດເຈນ.

**ຄໍາກ່າວຂານທີ່ວ່າ: ການປູກໝາກເຍົາ ຈະສາມາດສ້າງລາຍຮັບໃຫ້ກັບຊາວກະສິກອນຫຼັງການປູກປີທໍາອິດ**

ໝາກເຍົາຈະສາມາດໃຫ້ຜົນຜະລິດແກ່ນ ໃນປະລິມານທີ່ເໝາະສົມກັບການລົງທຶນໄດ້ພາຍຫຼັງການປູກໄປໄດ້ 2-3 ປີ. ໃນປີທໍາອິດ, ຕົ້ນໝາກເຍົາຈະໃຫ້ຜົນຜະລິດໜ້ອຍທີ່ສຸດ ແລະ ບໍ່ຄຸ້ມຄ່າຕໍ່ກັບການລົງທຶນ ເພາະວ່າໃນໄລຍະປີທໍາອິດຊາວກະສິກອນຕ້ອງໄດ້ລົງທຶນໃສ່ກັບການສ້າງສວນກ້າ, ການຈັດຊື້ປຸ໋ຍ, ການກຽມດິນ ແລະ ການດູແລຮັກສາ (ການກໍາຈັດວັດສະພືດ ແລະ ການຕັດແຕ່ງກິ່ງງ່າ). ດັ່ງນັ້ນ, ຊາວກະສິກອນຈະໄດ້ຮັບໝາກຜົນຢ່າງພໍພຽງພໍໃຈໄດ້ກໍ່ຕໍ່ເມື່ອປູກໝາກເຍົາໄປໄດ້ຢ່າງໜ້ອຍ 2-3 ປີ ຂຶ້ນໄປ.

**ຄໍາກ່າວຂານທີ່ວ່າ: ໝາກເຍົາສາມາດປູກປະສົມປະສານກັບພືດຊະນິດອື່ນໆໄດ້**

ໝາກເຍົາເໝາະສົມທີ່ສຸດທີ່ຈະປູກປະສົມປະສານກັບພືດຊະນິດອື່ນ ໂດຍສະເພາະໃນປີທໍາອິດຂອງການປູກເພາະຕົ້ນໝາກເຍົາຍັງມີຂະໜາດນ້ອຍ. ການປູກໝາກເຍົາປະສົມປະສານກັບພືດຊະນິດອື່ນ ຍັງບໍ່ທັນປະກົດເຫັນຢ່າງແຜ່ຫຼາຍໃນປະເທດລາວຂອງພວກເຮົາ, ແຕ່ກໍ່ປະກົດໃຫ້ເຫັນໃນບາງເຂດໂດຍສະເພາະແມ່ນການປູກປະ ສົມປະສານກັບເຂົ້າໄຮ່, ພືດຜັກ, ແລະ ພືດຕະກູນຖົ່ວ.


ຮູບພາບ: ການປູກເຂົ້າໄຮ່ປະສົມປະສານກັບການປູກໝາກເຍົາ

ຮູບພາບຂ້າງເທິງ ແມ່ນຕົວຢ່າງຂອງການປູກໝາກເຍົາຮ່ວມກັບເຂົ້າໄຮ່ຂອງຊາວກະສິກອນຢູ່ທີ່ເມືອງສັງທອງ. ພາຍຫຼັງການປູກໄດ້ 1 ປີ, ເຂົ້າກໍ່ຈະສາມາດເກັບກ່ຽວໄດ້ ແລະ ຕົ້ນໝາກເຍົາກໍ່ຈະສືບຕໍ່ຈະເລີນເຕີບໂຕ. ຖ້າປູກພືດອື່ນປະສົມປະສານໃນປີຕໍ່ໄປສາມາດປະຕິບັດໄດ້ ແຕ່ຕ້ອງມີການສຶກສາລາຍລະອຽດຂອງພືດຊະນິດນັ້ນພ້ອມທັງມີການວາງແຜນທີ່ດີເພາະໃນປີຕໍ່ໄປຕົ້ນໝາກເຍົາຈະຈະເລີນເຕີບໂຕ ແລະ ເລີ່ມປົກຄຸມພື້ນທີ່.

**ຄໍາກ່າວຂານທີ່ວ່າ: ໝາກເຍົາເປັນພືດທີ່ສາມາດທົນທານຕໍ່ກັບສັດຕູພືດ ແລະ ພະຍາດໄດ້ດີ**

ຄວາມສາມາດທາງດ້ານການທົນທານຕໍ່ກັບສັດຕູພືດ ແລະ ໂລກພະຍາດທີ່ໄດ້ຮັບການກ່າວຂານມານັ້ນແມ່ນໄດ້ອີງໃສ່ການສັງເກດເບິ່ງຕົ້ນທີ່ແກ່ເຕັມທີ່ທີ່ຢູ່ໂດດດ່ຽວຕົ້ນໜຶ່ງຕົ້ນດຽວຕາມທໍາມະຊາດເທົ່ານັ້ນ, ແຕ່ບໍ່ໄດ້ປຽບທຽບກັບຕົ້ນທີ່ປູກໃນສວນຂະໜາດໃຫຍ່. ພະຍາດສ່ວນໃຫຍ່ທີ່ພົບໃນຕົ້ນໝາກເຍົາທີ່ປູກໃນປະເທດລາວ ແລະ ເກີດຂຶ້ນໃນຫຼາຍໆກໍລະນີຍັງຄົງບໍ່ໄດ້ຮັບການແກ້ໄຂໂດຍຊາວກະສິກອນ ເນື່ອງຈາກວ່າພວກເຂົາຍັງຂາດປະສົບປະການ ແລະ ຄວາມຮູ້ດ້ານວິຊາການ. ເຕັກນິກໃນດ້ານການຈັດການວັດສະພືດແບບຊີວະພາບ ແມ່ນຍັງມີໃຫ້ເຫັນທົ່ວໄປໃນປະເທດລາວ ແຕ່ກໍ່ຍັງບໍ່ທັນແຜ່ຫຼາຍໃນແຕ່ລະຊຸມຊົນ. ໂດຍສະເພາະໃນປີທໍາອິດຂອງການປູກ, ຕົ້ນໝາກເຍົາມັກຈະຖືກທໍາລາຍໃນໄລຍະສັ້ນໆ ເຊັ່ນ: ປວກກັດກິນຮາກ ແລະ ລໍາຕົ້ນ. ດັ່ງນັ້ນ, ຈຶ່ງຄວນພັດທະນາຍຸດທະສາດ ແລະ ຄວາມຮູ້ກ່ຽວກັບການປ້ອງກັນ ແລະ ຄວບຄຸມພະຍາດຕ້ອງໄດ້ຮັບການພັດທະນາເພື່ອຫຼີກລ້ຽງຜົນກະທົບໃນທາງລົບທີ່ຈະເກີດຂຶ້ນຈາກພະຍາດຕ່າງໆ.


ຮູບພາບ: ການລະບາດຂອງວັດສະພືດ, ປວກ, ຮາກເນົ່າ ແລະ ພະຍາດອື່ນໆ

**ຄໍາກ່າວຂານທີ່ວ່າ: ການປູກໝາກເຍົາ (ການເກັບກູ້ຜົນຜະລິດ) ສາມາດສ້າງອາຊີບໃຫ້ກັບຄົນຢູ່ໃນທ້ອງຖິ່ນໄດ້.**

ເປັນສິ່ງກ່າວຂານກັນຢ່າງແຜ່ຫຼາຍວ່າ ໝາກເຍົາສາມາດສ້າງໂອກາດໃຫ້ຄົນໃນຊົນນະບົດໄດ້ມີວຽກເຮັດງານທໍາ ແລະ ທັງເປັນການຫາລາຍໄດ້ພິເສດ. ຖ້າຈະໃຫ້ອະທິບາຍແບບງ່າຍໆ ກໍ່ຄື: ຂະບວນການເກັບກູ້ຈະຕ້ອງໄດ້ດໍາເນີນໄປເປັນປະຈໍາທຸກວັນເພາະໝາກເຍົາໃຫ້ຜົນຜະລິດບໍ່ພ້ອມກັນ ແລະ ມັນມີຄວາມຈໍາເປັນທີ່ຈະຕ້ອງໃຊ້ແຮງງານຄົນ ເພາະຍັງບໍ່ທັນມີເຄື່ອງຈັກທີ່ສາມາດເກັບກູ້ຜົນຜະລິດໝາກເຍົາໄດ້. ການທີ່ຈະນໍາແກ່ນອອກຈາກເປືອກຂອງໝາກ

ເຍົານັ້ນຈຳເປັນຈະຕ້ອງໄດ້ໃຊ້ແຮງງານຄົນ ແລະ ຕ້ອງແກະໃຫ້ສຳເລັດພາຍໃນວັນດຽວ. ຖ້າບໍ່ດັ່ງນັ້ນ, ແກ່ນຈະແຕກງອກເນື່ອງຈາກໄດ້ຮັບຄວາມຊຸ່ມທີ່ຢູ່ໃນໝາກ. ຖ້າບໍ່ສາມາດແກາະໄດ້ພາຍໃນວັນດຽວ, ແນະນຳໃຫ້ນຳເອົາໝາກເຍົາໄປຕາກແດດໄວ້ ປະ ມານ 2-3 ແດດ ເພື່ອເຮັດໃຫ້ຄວາມຊຸ່ມລະເຫີຍອອກຈາກໝາກ.

ບັນຫາສຳລັບການເກັບກູ້ຜົນຜະລິດໝາກເຍົາ ກໍ່ຄືວ່າ: ໝາກເຍົາຊຸກບໍ່ພ້ອມກັນ. ຕ່າງຈາກພືດ ຫຼື ໄມ້ໃຫ້ໝາກຊະນິດອື່ນໆ, ການຜະລິດແກ່ນໝາກເຍົາແມ່ນຂະບວນການທີ່ຕໍ່ເນື່ອງຈະຫຼອດໄລຍະລະດູຝົນ. ເສັ້ນສະແດງທີ່ຈະສະແດງໃຫ້ເຫັນລຸ່ມນີ້ແມ່ນຈະໄດ້ອະທິບາຍເຖິງບັນຫາດັ່ງກ່າວນີ້ໄດ້ ເຊິ່ງຂໍ້ມູນດັ່ງກ່າວໄດ້ຈາກການຕິດຕາມ ແລະ ການເກັບກູ້ຕະຫຼອດໄລຍະເວລາ 1 ລະດູຝົນ.




ເສັ້ນສະແດງ: ການພັດທະນາຂອງແກ່ນຈາກຕົ້ນທີ່ໄດ້ຮັບການຄັດເລືອກ ແລະ ໝາຍເບີໄວ້ເພື່ອການສຶກສາຜົນຜະລິດ

ສິ່ງທີ່ປະກົດໃຫ້ເຫັນຢ່າງຈະແຈ້ງໃນເສັ້ນສະແດງ: ຕົ້ນໝາກເຍົາເບີທີ 14 ໃຫ້ຜົນຜະລິດແກ່ນຫຼາຍທີ່ສຸດ ຄື: ປະມານ 1,300 ແກ່ນ ໃນລະຫວ່າງ ເດືອນກໍລະກົດ ແລະ ເດືອນຕຸລາ. ຂະບວນການເກັບກູ້ຜົນຜະລິດໝາກເຍົາຈະສະດວກຫຼາຍຂື້ນ ຖ້າຫາກວ່າຕົ້ນໝາກເຍົາສາມາດໃຫ້ຜົນຜະລິດພ້ອມໆກັນໃນໄລຍະເວລາທີ່ແນ່ນອນ (ຍົກຕົວຢ່າງເຊັ່ນ: ໝາກມ່ວງ...).

ເມື່ອພິຈາລະນາເບິ່ງເງື່ອນໄຂຂອງປະເທດລາວແລ້ວ, ໄລຍະເວລາຂອງການເກັບກູ້ຜົນຜະລິດຖືໄດ້ວ່າເປັນບັນຫາເນື່ອງຈາກເປັນໄລຍະເວລາຂອງລະດູຝົນ ແລະ ໃນລະດູນີ້ປະຊາຊົນລາວສ່ວນໃຫຍ່ຍັງຄົງຫຍຸ້ງຢູ່ກັບການຜະລິດ ໂດຍສະເພາະແມ່ນການເຮັດໄຮ່ເຮັດນາ. ອີງຕາມປະສົບການຂອງ LIRE ທີ່ໄດ້ຮັບໃນໄລຍະທີ່ລົງໄປສົ່ງເສີມປະຊາຊົນໃນເຂດຊົນນະບົດແລ້ວກໍ່ພົບວ່າ: ມັນເປັນໄປໄດ້ຍາກທີ່ປະຊາຊົນຈະປະຖິ້ມການຜະລິດເຂົ້າແລ້ວຫັນມາເກັບກູ້ຜົນຜະລິດໝາກເຍົາ ຫຼື ເຮັດການຜະລິດຢ່າງອື່ນໆ.

ສິ່ງທີ່ສຳຄັນກໍ່ຄືວ່າ: ການເກັບກູ້ໝາກເຍົາທີ່ສຸກແມ່ນຕ້ອງປະຕິບັດໃຫ້ໄວ ບໍ່ດັ່ງນັ້ນແລ້ວໝາກເຍົາຈະລົ່ນລົງດິນ ແລະ ແກ່ນກໍ່ຈະເລີ່ມງອກ. ນັ້ນກໍ່ໝາຍຄວາມວ່າ: ແກ່ນບໍ່ສາມາດທີ່ຈະນຳໄປໃຊ້ເພື່ອການບີບເອົານ້ຳມັນໄດ້ອີກຕໍ່ໄປ.

**ຄຳກ່າວຂານທີ່ວ່າ: ໝາກເຍົາສາມາດໃຫ້ຜົນຜະລິດ 4 ໂຕນ ຕໍ່ ເຮັກຕ້າ ຕໍ່ ປີ ຫຼັງຈາກການປູກໄດ້ 3 ປີ ຂຶ້ນໄປ.**

ຄຳກ່າວຂານດັ່ງກ່າວນີ້ຍັງຄົງເປັນບັນຫາທີ່ຕ້ອງໄດ້ຫາຄຳຕອບ ເນື່ອງຈາກຍັງຂາດປະສົບການ ແລະ ຂໍ້ມູນທີ່ສາມາດເຊື່ອຖືໄດ້ຢ່າງແນ່ນອນ. ໃນປະຈຸບັນນີ້, ມັນເປັນໄປໄດ້ຍາກທີ່ຈະສາມາດຄາດຄະເນຜົນຜະລິດແກ່ນຂອງໝາກເຍົາໄດ້ ເນື່ອງຈາກມີຫຼາຍໆປັດໃຈທີ່ສາມາດສົ່ງຜົນກະທົບໃຫ້ກັບຜົນຜະລິດຂອງໝາກເຍົາໄດ້ ເຊັ່ນ:

- ສະພາບອາກາດຂອງແຕ່ລະທ້ອງຖິ່ນ
- ຄວາມອຸດົມສົມບູນຂອງດິນ
- ເຕັກນິກການປູກ (ການປູກດ້ວຍງ່າ ແລະ ແກ່ນ)
- ການຈັດການທີ່ເໝາະສົມ ເຊັ່ນ: ການຕັດແຕ່ງກິ່ງງ່າ, ການກຳຈັດວັດສະພືດ, ການໃສ່ປຸ໋ຍ ແລະ ການເກັບກູ້ຜົນຜະລິດ.

ໃນປະຈຸບັນນີ້, ຂໍ້ມູນກ່ຽວກັບຜົນຜະລິດແກ່ນໝາກເຍົາຢູ່ໃນ ສປປ. ລາວ ຍັງບໍ່ທັນມີການຢັ້ງຢືນໄດ້ເປັນທີ່ແນ່ນອນ. ຍິ່ງໄປກວ່ານັ້ນ, ບັນຫາດັ່ງກ່າວນີ້ຍັງຈະຕ້ອງພິຈາລະນາເຖິງປັດໃຈອື່ນໆຂອງການປູກອີກດ້ວຍ (ເຊັ່ນ: ໄລຍະເວລາຂອງການປູກ, ວິທີການປູກ, ສະພາບແວດລ້ອມຂອງທ້ອງຖິ່ນນັ້ນ, ການດູແລຮັກສາ...) LIRE ໄດ້ມີໂຄງ ການຕິດຕາມການປູກໝາກເຍົາໃນດິນທີ່ອຸດົມສົມບູນແຫ່ງໜຶ່ງ ເຊິ່ງຜົນອອກມາກໍ່ພົບວ່າ: ໃນປີທີ 2 ຫຼັງການປູກ, ຜົນຜະລິດແກ່ນໂດຍສະເລ່ຍແມ່ນ ປະມານ 300 ກຼາມ ຕໍ່ ຕົ້ນ ຫຼື 600 ກິໂລ ຕໍ່ ເຮັກຕ້າ. ຂໍ້ມູນເພີ້ມເຕີມຈາກຕົ້ນທີ່ແກ່ເຕັມທີ່ຈາກພື້ນທີ່ປູກຂະໜາດໃຫຍ່ ຫຼື ແມ້ແຕ່ການປູກເປັນຮົ້ວຍັງຄົງມີ ການສຶກສາຄົ້ນຄວ້າຢ່າງລະອຽດໂດຍວິຊາການທີ່ມີຄວາມສຳນິສຳນານຈາກສະຖາບັນທີ່ເຊື່ອຖືໄດ້.

ຄຳແນະນຳເພີ້ມເຕີມ: ມະຫາວິທະຍາໄລ ແລະ ບໍລິສັດເອກະຊົນຫຼາຍໆແຫ່ງທີ່ກ່ຽວຂ້ອງຄວນມີການສຶກສາ ແລະ ເກັບກຳຂໍ້ມູນທີ່ລະອຽດໂດຍອີງໃສ່ເນື້ອທີ່ການຜະລິດຕົວຈິງທີ່ມີຢູ່ໃນ ສປປ.ລາວ.

**ຄຳກ່າວຂານທີ່ວ່າ: ຊາວກະສິກອນສາມາດຜະລິດນ້ຳມັນກະຊວານຊີວະພາບຈາກການປູກໝາກເຍົາ ເພື່ອເອົາໄວ້ໃຊ້ເອງໃນຊຸມຊົນ**

ໃນສະພາບເງື່ອນໄຂຕົວຈິງຂອງປະເທດລາວໃນປະຈຸບັນນີ້, ບໍລິສັດທີ່ສົ່ງເສີມການປູກໝາກເຍົາໄດ້ຕັ້ງຈຸດປະສົງຂອງການຜະລິດເພື່ອການສົ່ງອອກໄວ້ຢ່າງຊັດເຈນ, ແຕ່ກໍ່ມີຈຳນວນໜ້ອຍໜຶ່ງ ທີ່ໄດ້ວາງແຜນສຳລັບການຜະລິດເປັນນ້ຳມັນກະຊວານຊີວະພາບເພື່ອຊົມໃຊ້ພາຍໃນຊຸມຊົນ. ອີງຕາມເຕັກນິກວິຊາການແລ້ວ, ມັນມີຄວາມເປັນໄປໄດ້ທີ່ຈະຈັດຕັ້ງສະມາຄົມຊາວກະສິກອນເພື່ອດຳເນີນການປູກ ແລະ ການຜະລິດນ້ຳມັນກາຊວນຊີວະພາບຂະໜາດນ້ອຍ ເພື່ອການຊົມໃຊ້ຢູ່ໃນຊຸມຊົນຂອງເຂົາເອງ ເຊັ່ນ: ການນຳໃຊ້ກັບລົດໄຖນາ, ຈັກປ້ຳນ້ຳ, ເຄື່ອງຈັກປັ່ນໄຟ ແລະ ອື່ນໆ. ແຕ່ເຖິງຢ່າງໃດກໍ່ຕາມ, ໂຄງການດັ່ງກ່າວຍັງຕ້ອງມີການນຳໃຊ້ງົບປະມານ ແລະ ຜູ້ດຳເນີນການທີ່ມີຄວາມສຳນິສຳນານ ແລະ ທັກສະທາງດ້ານວິຊາການ. ດັ່ງນັ້ນ, ການທີ່ຈະສ້າງໂຮງງານຜະລິດນ້ຳມັນກະຊວນຊີວະພາບຂະໜາດນ້ອຍແບບກະຈາຍ ຢູ່ໃນທ້ອງຖິ່ນນັ້ນ ແມ່ນມີຄວາມຮຽກຮ້ອງຕ້ອງການທາງດ້ານການຝຶກອົບຮົມທາງດ້ານວິຊາການ ແລະ ການສະໜັບສະໜູນທາງດ້ານການເງິນເພື່ອກຳນົດມາດຕະຖານການຜະລິດເພື່ອຫຼີກລ້ຽງບໍ່ໃຫ້ມີຜົນກະທົບກັບເຄື່ອງຈັກເມື່ອເວລານຳໄປໃຊ້.

ຂໍ້ແນະນຳເພີ້ມເຕີມ: ອົງການ NGO, ອົງການເອກກະຊົນ ແລະ ສະຖາບັນຂອງລັດຄວນໃຫ້ການສະໜັບໜູນກິດຈະກຳດັ່ງກ່າວໃຫ້ຫຼາຍຂຶ້ນ. ຖ້າບໍ່ດັ່ງນັ້ນ, ປະຊາຊົນກໍ່ຈະໄດ້ຮັບໂອກາດໜ້ອຍທີ່ຈະຜະລິດນ້ຳມັນກະຊວານຊີວະພາບໄວ້ໃຊ້ເອງໃນຊຸມຊົນ.

**ຄຳກ່າວຂານທີ່ວ່າ: ການປູກໝາກເຍົາຈະບໍ່ສົ່ງຜົນກະທົບຕໍ່ກັບການປູກພືດທີ່ເປັນອາຫານອື່ນໆ.**

ການຄາດຫວັງສູງຕໍ່ກັບຜົນຜະລິດ ແລະ ຍຸດທະວິທີໃນການສົ່ງເສີມແບບເຊີງລຸກ ແລະ ໃຫ້ຄວາມຫວັງສູງທາງເສດຖະກິດອາດຈະເປັນການສ້າງແຮງຈູງໃຈໃຫ້ປະຊາຊົນປ່ຽນຈາກການປູກພືດທີ່ເປັນອາຫານຫັນມາປູກໝາກເຍົາແທນກໍ່ເປັນໄດ້. ໃນກໍລະນີນີ້, ຊາວກະສິກອນອາດຈະມີຄວາມຊ່ຽງຕໍ່ກັບການຂາດແຄນສະບຽງອາຫານ ຫຼື ຂາດລາຍໄດ້. ທາງເລືອກໜຶ່ງທີ່ດີອາດຈະແນະນຳໃຫ້ປະຊາຊົນປູກໝາກເຍົາປະສົມປະສານກັບພືດຊະນິດອື່ນ ຫຼື ການປູກເປັນຮົ້ວ. ໃນປະຈຸບັນເຫັນໄດ້ວ່າ ສື່ຕ່າງໆ ຫຼື ເຄື່ອງມືທີ່ໃຊ້ສຳລັບວຽກງານການສົ່ງເສີມແມ່ນມີຄວາມຈຳເປັນ ແລະ ຕ້ອງການທີ່ສຸດເພື່ອທີ່ຈະນຳໄປໃຊ້ເຂົ້າໃນການສົ່ງເສີມປະຊາຊົນໃນຊົນນະບົດ. ຖ້າຫາກວ່າມີການຄົ້ນພົບວິທີການສຳລັບການປູກໝາກເຍົາແບບຍືນຍົງ ແລະ ເປັນເສດຖະກິດ, ຊາວກະສິກອນອາດຈະຫັນມາຈັດສັນດິນ, ແຮງງານ ແລະ ທຶນຮອນທີ່ເຂົາເຈົ້າມີຢູ່ເຂົ້າໃນການປູກໝາກເຍົາກໍ່ເປັນໄດ້.

---

## *V. ຄວາມອາດສາມາດໃນການນຳໃຊ້ ແລະ ການຮອງຮັບເອົາໝາກເຍົາ ຢູ່ໃນ ສປ ປ. ລາວ*

ໃນສ່ວນນີ້, ພວກເຮົາຈະໄດ້ນຳສະເໜີຄວາມອາດສາມາດຕົ້ນຕໍ 3 ປະ ການສຳລັບການນຳໃຊ້ໝາກເຍົາຢູ່ໃນ ສປປ.ລາວ. ພວກເຮົາໄດ້ກຳນົດເອົາຂໍ້ດີ ແລະ ຂໍ້ເສຍອັນເດັ່ນໆຂອງຄວາມອາດສາມາດດັ່ງກ່າວ ພ້ອມທັງການປຶກສາຫາລືກ່ຽວກັບຄວາມຕ້ອງການໃນການດຳເນີນໂຄງການ ແລະ ໄລຍະເວລາເພື່ອການຮອງຮັບ ແລະ ການພັດທະນາທາງດ້ານການຕະຫຼາດ (ຍົກຕົວຢ່າງເຊັ່ນ: ຄວາມພ້ອມໃນດ້ານການຕອບສະໜອງວັດຖຸດິບ, ການນຳໃຊ້ແຮງງານ, ຊ່ອງທາງທາງດ້ານເສດຖະກິດ ແລະ ອື່ນໆ...). ຄວາມອາດສາມາດສຳລັບການປູກໝາກເຍົາ ເຊິ່ງຈະໄດ້ລວມເອົາປະເດັນສຳຄັນຫຼາຍຢ່າງ ເຊັ່ນ: ກ) ໝາກເຍົາໃນການເປັນພືດເສດຖະກິດໂດຍສະເພາະເມື່ອນຳມາປຽບ ທຽບກັບພືດຊະນິດອື່ນໆ ເຊັ່ນ: ຝ້າຍ, ສາລີ, ມັນຕົ້ນ, ກາເຟ, ໄມ້ໃຫ້ໝາກອື່ນໆ, ຂ) ໝາກເຍົາໃນການເປັນວັດຖຸດິບທີ່ນຳໃຊ້ເຂົ້າໃນອຸດສະຫະກຳຜະລິດນ້ຳມັນກະຊວານຊີວະພາບ ເພື່ອໃຊ້ແທນນ້ຳມັນກາຊວນຈາກໃຕ້ດິນ, ແລະ ຄ) ໝາກເຍົາສຳລັບການຜະລິດກະແສໄຟຟ້າໃນຊົນນະບົດ.

## V.I. ໝາກເຍົາໃນການເປັນພືດເສດຖະກິດ

ໝາກເຍົາຖືມີຄວາມອາດສາມາດທີ່ຈະກາຍເປັນພືດເສດຖະກິດ ສຳລັບຊາວກະສິກອນຂະໜາດນ້ອຍໃນ ສປປ.ລາວ ໄດ້ຖ້າຫາກວ່າມີເງື່ອນໄຂຕ່າງໆດັ່ງຕໍ່ໄປນີ້: i) ວິທີການປູກໄດ້ຮັບການຈັດຕັ້ງປະຕິບັດຢ່າງຖືກຕ້ອງ ແລະ ເໝາະສົມຕາມຫຼັກວິຊາການ, ii) ມີການໃຫ້ການສົ່ງເສີມ ແລະ ການຕິດຕາມຢ່າງໄກ້ສິດ ແລະ ເປັນໄລຍະ, iii) ບໍລິສັດມີການລົງທຶນໃຫ້ໃນໄລຍະທຳອິດ, iv) ມີແຮງງານພຽງພໍ ແລະ ກຽມພ້ອມທີ່ຈະທຳການຜະລິດ, v) ມີການປະສົມປະສານກັບລະບົບການຜະລິດກະສິກຳໃນແບບອື່ນໆຢ່າງເໝາະສົມ, vi) ມີການຮັບປະກັນດ້ານການຕະຫຼາດ ແລະ ວາງລາຄາຢ່າງຍຸດຕິທຳ.

### ລະບົບການປູກທີ່ເໝາະສົມ ແລະ ຍືນຍົງ

ມີການນຳສະເໜີ 2 ແບບວິທີ ໃນການປູກໝາກເຍົາທີ່ເໝາະສົມ ຄື: 1) ການປູກໃນພື້ນທີ່ປູກຄືກັບໄມ້ໃຫ້ໝາກຊະນິດອື່ນໆ ແລະ 2) ການປູກເປັນຮົ້ວ ຫຼື ເປັນແຖວລຽບຕາມທາງ. ຂໍ້ດີຂອງການປູກແບບເປັນສວນຄືສາມາດປູກໄດ້ໃນຂະໜາດໃຫຍ່ຕາມຄວາມຕ້ອງການ ແລະ ສາມາດປູກເພື່ອຜະລິດເປັນສິນຄ້າໄດ້. ການປູກແບບນີ້ຈະເຮັດໃຫ້ຊາວກະສິກອນສາມາດລົງທຶນ ແລະ ປູກພຽງຄັ້ງດຽວແຕ່ຈະຕ້ອງໄດ້ເອົາໃຈໃສ່ໃນການດູແລຮັກສາທີ່ເພີ້ມຂຶ້ນໃນແຕ່ລະປີ. ພາຍຫຼັງການປູກໄປໄດ້ 2-3 ປີ, ຕົ້ນໝາກເຍົາກໍ່ຈະສາມາດໃຫ້ຜົນຜະລິດທີ່ສົມເຫດສົມຜົນ ແລະ ຄຸ້ມຄ່າຕໍ່ການລົງທຶນ ກົງກັນຂ້າມກັບການປູກຢ່າງພາລາ ເຊິ່ງຈະໃຊ້ເວລາຍາວນານ ປະມານ 5-8 ປີ ຈຶ່ງຈະສາມາດເກັບກູ້ຜົນຜະລິດໃນຄັ້ງທຳອິດ ແລະ ສາມາດສ້າງລາຍຮັບໄດ້. ແຕ່ເຖິງຢ່າງໃດກໍ່ຕາມ, ແຮງງານທີ່ຈະນຳໃຊ້ເຂົ້າໃນການກຳຈັດວັດສະພືດ ແລະ ການເກັບກູ້ຜົນຜະລິດກໍ່ບໍ່ຄວນຖືກມອງຂ້າມ ເມື່ອມີການປຽບໃສ່ກັບພືດຊະນິດອື່ນໆ ເຊັ່ນ: ຝ້າຍ ຫຼື ກາເຟ. ຂໍ້ຂາດຕົກບົກພ່ອງໃນການກຳນົດຮູບແບບຂອງການປູກອາດຈະກໍ່ໃຫ້ເກີດມີການນຳໃຊ້ທີ່ດິນທີ່ເໝາະສົມກັບການປູກພືດຊະນິດອື່ນ ເຊິ່ງຈະເປັນສາເຫດຂອງການແຂ່ງຂັນກັບພືດອາຫານຊະນິດອື່ນໆໄດ້ເຊັ່ນດຽວກັນ.

ການປູກໃນຮູບແບບດັ່ງກ່າວຈະມີຄວາມເໝາະສົມຖ້າຫາກວ່າ ມີເນື້ອທີ່ເປົ່າຫວ່າງຫຼາຍພຽງພໍ ແລະ ມັນຍັງຕ້ອງການກຳລັງແຮງງານຫຼາຍພໍສົມຄວນເມື່ອທຽບກັບການປູກພືດເສດຖະກິດຊະນິດອື່ນໆໃນ ສປປ.ລາວ.

ສຳລັບການປູກແບບເປັນຮົ້ວ ຫຼື ເປັນແຖວຕາມແນວທາງ, ອາດຈະບໍ່ມີການແຂ່ງຂັນກັບພືດອາຫານຊະນິດອື່ນໆ ເນື່ອງຈາກບໍ່ໄດ້ມີການນຳໃຊ້ເນື້ອທີ່ທີ່ເໝາະສົມກັບການປູກພືດຊະນິດອື່ນໆ. ຂໍ້ດີອີກຢ່າງໜຶ່ງຂອງການປູກເປັນຮົ້ວກໍ່ຄື ການເປັນມິດຕໍ່ສິ່ງແວດລ້ອມ ເນື່ອງຈາກພວກມັນເຮັດໜ້າທີ່ໃນການປ້ອງກັນການເຊາະເຈື່ອນຂອງດິນ ແລະ ປ້ອງກັນສັດທີ່ຈະເຂົ້າມາທຳລາຍຜົນລະປູກ. ເຖິງຢ່າງໃດກໍ່ຕາມ, ຜົນຜະລິດຂອງໝາກເຍົາທີ່ໄດ້ຈາກການປູກໃນຮູບແບບດັ່ງກ່າວນີ້ແມ່ນມີປະລິມານໜ້ອຍ ເນື່ອງຈາກຂອບເຂດຮົ້ວຂອງປະຊາຊົນມີຂະໜາດນ້ອຍ ແລະ ມີທາດອາຫານໃນດິນໜ້ອຍ. ປະຊາຊົນສາມາດປູກຕົ້ນໝາກເຍົາໄດ້ ປະມານ 400 ຕົ້ນ ຕໍ່ ເຮັກຕາ.

### ການໃຫ້ການສົ່ງເສີມ ແລະ ການລົງຕິດຕາມຢ່າງໄກ້ສິດ

ໝາກເຍົາແມ່ນຖືໄດ້ວ່າຖືກນຳໃຊ້ກັນຢ່າງແຜ່ຫຼາຍຢູ່ໃນ ສປ ປ.ລາວ, ສ່ວນໃຫຍ່ລ້ວນແລ້ວແຕ່ແມ່ນສາຍພັນທຳມະຊາດ ແລະ ມີການດູແລຮັກສາໜ້ອຍຈາກປະຊາຊົນ. ຊາວກະສິກອນສ່ວນໃຫຍ່ມີທັກສະດ້ານການປູກໃນລະດັບຂັ້ນພື້ນຖານ ແຕ່ຍັງຂາດປະ ສົບການ ແລະ ເຕັກນິກວິຊາການທີ່ດີ ເຊັ່ນ: ການປ້ອງກັນພະຍາດ, ການໃສ່ຝຸ່ນ, ການປູກປະສົມປະສານກັບພືດອື່ນ, ການເກັບກູ້ຜົນຜະລິດ ແລະ ການແກະເປືອກຕະຫຼອດຮອດເຕັກນິກໃນການເກັບຮັກສາ. ໃນຈຸດນີ້, ພະແນກກຳສິກຳ-ປ່າໄມ້ແຂວງ (PAFO) ແລະ ຫ້ອງການກະສິກຳ-ປ່າໄມ້ເມືອງ (DAFO) ແມ່ນມີບົດບາດສຳຄັນໃນການໃຫ້ການສົ່ງເສີມ ແລະ ຕິດຕາມຢ່າງໃກ້ສິດຕິດແທດ. ເຖິງຢ່າງໃດກໍ່ຕາມ, ກ່ອນອື່ນໝົດພະແນກ ກະສິກຳ-ປ່າໄມ້ແຂວງ/ຫ້ອງການກະສິກຳ-ປ່າໄມ້ເມືອງຕ້ອງໄດ້ຮັບສື່ ຫຼື ເຄື່ອງ ມືສຳລັບການສົ່ງເສີມ ພ້ອມທັງການຝຶກອົບຮົມທາງດ້ານເຕັກນິກວິຊາການໃນການປູກໝາກເຍົາ.

ຂໍ້ແນະນຳເພີ່ມເຕີມ: ທັກສະໃນດ້ານການປູກໝາກເຍົາໃນລະດັບຂັ້ນພື້ນຖານແມ່ນສາມາດສຶກສາໄດ້ທົ່ວໄປ ແຕ່ຕ້ອງໄດ້ມີການກະຈາຍການຝຶກອົບຮົມ ແລະ ມີການຮ່ວມມືກັນຢ່າງໄກ້ສິດລະຫ່ວາງຫ້ອງການກະສິກຳ-ປ່າໄມ້ເມືອງ ແລະ ຊາວກະສິກອນ. ພະນັກງານສົ່ງເສີມກະສິກຳເມືອງແມ່ນມີບົດບາດສຳຄັນໃນການລົງໄປສົ່ງເສີມ ແລະ ຕິດຕາມກວດກາເພື່ອຊ່ວຍໃຫ້ປະຊາຊົນສາມາດປູກໝາກເຍົາໄດ້ຢ່າງປະສົບຜົນສຳເລັດ ແລະ ຍືນຍົງ. ຍິ່ງໄປກ່ວານັ້ນ, ການຮ່ວມມືກັນລະຫວ່າງຊາວກະສິກອນດ້ວຍກັນກໍ່ມີຄວາມຈຳເປັນ ເຊິ່ງສາມາດປະຕິບັດໄດ້ໂດຍການເປີດກອງປະຊຸມເພື່ອປຶກສາຫາລື ແລະ ທຳຄວາມເຂົ້າໃຈຕໍ່ກັບວຽກງານດັ່ງກ່າວລະຫວ່າງປະຊາຊົນທີ່ຢູ່ໃນຊຸມຊົນທີ່ກ່ຽວຂ້ອງ.

### ການໃຫ້ການສະໜັບສະໜູນທາງດ້ານການເງິນຈາກພາຍນອກ

ການສ້າງສວນປູກໝາກເຍົາ ຫຼື ການປູກເປັນຮົ້ວນັ້ນ ລ້ວນແລ້ວແຕ່ມີຄວາມຮຽກຮ້ອງຕ້ອງການທາງດ້ານການໃຊ້ຈ່າຍ ແລະ ກຳລັງແຮງງານ. ອົງການຕ່າງໆທີ່ໃຫ້ການສົ່ງເສີມການປູກໝາກເຍົາ ຄວນວາງຍຸດທະສາດທີ່ແຕກຕ່າງກັນເພື່ອສົ່ງເສີມປະຊາຊົນໃນການປູກໝາກເຍົາ. ອົງການຕ່າງໆທີ່ເຮັດໜ້າທີ່ສົ່ງເສີມການປູກໝາກເຍົາໂດຍສ່ວນໃຫຍ່ແລ້ວ ຈະໃຫ້ການຄາດຫວັງຕໍ່ຜົນຜະລິດເກີນຄວາມເປັນຈິງ, ແຕ່ໃຫ້ການເອົາໃຈໃສ່ຕໍ່ວຽກງານການປູກໜ້ອຍ. ເຖິງຢ່າງໃດກໍ່ຕາມ, ບາງບໍລິສັດແມ່ນໄດ້ລິເລີ່ມການລົງທຶນໄປແລ້ວ (ຍົກຕົວຢ່າງ ເຊັ່ນ: 30 US$ ຕໍ່ ເຮັກຕ້າ) ເຊິ່ງໄດ້ຈ່າຍໃຫ້ແກ່ປະຊາຊົນຜູ້ທີ່ເຂົ້າຮ່ວມໂຄງການເປັນເງິນອຸດໜູນ ເໝືອນກັບການປະຕິບັດກັບຊາວກະສິກອນ ຜູ້ທີ່ເຂົ້າຮ່ວມໃນໂຄງການປູກພືດເສດຖະກິດຊະນິດອື່ນໆ ເຊັ່ນ: ຢາສູບ. ເຖິງຢ່າງໃດກໍ່ຕາມ, ຄວາມຫ້ວງຂອງປະຊາຊົນທີ່ເຂົ້າຮ່ວມໂຄງການປູກໝາກເຍົາກໍ່ມີພຽງແຕ່ຕ້ອງການໃຫ້ອົງການທີ່ສົ່ງເສີມ ຮັບປະກັນດ້ານການເກັບຊື້ຜົນຜະລິດຂອງເຂົາເຈົ້າໃນລາຄາທີ່ສົມເຫດສົມຜົນຕາມກົນໄກຕະຫລາດເທົ່ານັ້ນ. ໂດຍທົ່ວໄປແລ້ວ, ມັນມີຄວາມສຳຄັນທີ່ຈະຮັບປະກັນວ່າຊາວກະສິກອນບໍ່ຕ້ອງມີຄວາມຊ່ຽງໃດໆຈາກການປູກໝາກເຍົາ. ງົບປະມານຈຳນວນໜຶ່ງຕ້ອງໄດ້ຖືກສຳຮອງໄວ້ ເພື່ອຊົດເຊີຍຄືນໃຫ້ແກ່ຊາວກະສິກອນໃນເວລາທີ່ໂຄງການປູກໝາກເຍົາບໍ່ໄດ້ຮັບຜົນ ຫຼື ບໍ່ມີປະສິດຕິພາບຕາມທີ່ນັກລົງທຶນໄດ້ລົງໄປໃຫ້ການໂຄສະນາ.

### ກຳລັງແຮງງານທີ່ກຽມພ້ອມ ແລະ ພຽງພໍຕໍ່ການຜະລິດ

ໃນສະພາບຄວາມເປັນຈິງຂອງປະເທດລາວແລ້ວ, ການຈັດຫາແຮງງານເພື່ອເຂົ້າຮ່ວມໃນໂຄງການການຜະລິດໃດໜຶ່ງໃນໄລຍະລະດູຝົນແມ່ນຖືວ່າຍັງມີບັນຫາ. ອົງຕາມການລາຍງານຂອງຊາວກະສິກອນຜູ້ທີ່ປູກໝາກເຍົາແລ້ວເຫັນວ່າ ປະຊາຊົນສ່ວນໃຫຍ່ບໍ່ໄດ້ໃຫ້ຄວາມສົນໃຈທີ່ຈະຢາກເຂົ້າຮ່ວມໃນໂຄງການປູກໝາກເຍົາ. ເຫດຜົນທີ່ສຳຄັນຕົ້ນຕໍກໍ່ຄືວ່າ ໝາກເຍົາຈັດເປັນໄມ້ລົ້ມລຸກ ແລະໃຫ້ຜົນຜະລິດເປັນລະດູການ. ແຕ່ເຖິງຢ່າງໃດກໍ່ຕາມ, ມັນກໍ່ເປັນທີ່ສັງເກດເຫັນໄດ້ວ່າ ການເກັບກູ້ຜົນຜະລິດໝາກເຍົາແມ່ນມີຄວາມຈຳເປັນທີ່ຈະຕ້ອງນຳໃຊ້ແຮງງານຫຼາຍສົມຄວນ ແລະ ບາງຄັ້ງອາດຈະມີຄວາມສ່ຽງຕໍ່ກັບການສູນເສຍງົບປະມານເຂົ້າໃນການຜະລິດໝາກເຍົາ ຖ້ານຳໄປປຽບທຽບກັບພືດເສດຖະກິດຊະນິດອື່ນໆ.

ຄຳແນະນຳເພີ້ມເຕີມ: ການນຳໃຊ້ແຮງງານເຂົ້າໃນການດູແລຮັກສາການປູກໝາກເຍົາໃນໄລຍະທີ່ມີການໃຫ້ຜົນຜະລິດແມ່ນມີໜ້ອຍກວ່າການນຳໃຊ້ເຂົ້າໃນພືດອາຫານ ແລະ ພືດເສດຖະກິດອື່ນໆ ແລະ ມັນຖືໄດ້ວ່າເປັນຂໍ້ດີສຳລັບສະພາບຂອງການຂາດກຳລັງແຮງງານຢູ່ໃນ ສປປ.ລາວ. ແຕ່ເຖິງຢ່າງໃດກໍ່ຕາມ, ຄວາມພະຍາຍາມທີ່ໃຊ້ເຂົ້າໃນການເກັບກູ້ໝາກເຍົາຕ້ອງຖືກນຳມາປຽບທຽບກັບການປູກຝ້າຍ, ກາເຟ ແລະ ພືດເສດຖະກິດອື່ນໆຢູ່ໃນ ສປປ.ລາວ.

### ການປະສົມປະສານການປູກໝາກເຍົາກັບການຜະລິດກະສິກຳອື່ນໆ

ອີງຕາມສະພາບຂອງການຂາດກຳລັງແຮງງານແລ້ວເຫັນວ່າ ມັນບໍ່ມີຄວາມຈຳເປັນທີ່ຈະຕ້ອງເພີ້ມກຳລັງປະລິມານວຽກ ໃນລະດູທີ່ມີການຂາດເຂີນກຳລັງແຮງງານ ເນື່ອງວ່າແຮງງານສ່ວນໃຫຍ່ຖືກນຳໃຊ້ເຂົ້າໃນການຜະລິດພືດອາ ຫານຫຼັກ. ຖ້າຕ້ອງການໃຫ້ລະບົບການຜະລິດທັງສອງຢ່າງທີ່ກ່າວມານັ້ນມີຄວາມກົມກຽວກັນ ແລະ ຍືນຍົງນັ້ນ, ມັນມີຄວາມຕ້ອງການທີ່ຈະຕ້ອງດຳເນີນການຜະລິດໃນຮູບແບບປະສົມປະສານ. ຖ້າຫາກຈະຕ້ອງມີການເຊື່ອມໂຍງ ຫຼື ປະສົມປະສານວຽກງານການປູກໝາກເຍົາ ແລະ ວຽກງານການຜະລິດພືດອາຫານຫຼັກເຂົ້າໃສ່ກັນໃນເວລາດຽວກັນແລ້ວ ເຫັນວ່າ, ການປູກໝາກເຍົາກໍ່ອາດຈະບໍ່ແມ່ນລະບົບການຜະລິດທີ່ຍືນຍົງ ແລະ ໃນທາງກົງກັນຂ້າມກໍ່ອາດຈະເປັນການເພີ້ມ ໜ້າວຽກໃຫ້ກັບຊາວກະສິ ກອນຂຶ້ນຕື່ມອີກ.

ຂໍ້ແນະນຳເພີ້ມເຕີມ: ປະຕິທິນການປູກພືດໃນທ້ອງຖິ່ນ (ເວລາໃດຄວນມີການປູກພືດ/ການເກັບກູ້ຜົນຜະລິດ) ຕ້ອງຖືກພິຈາລະນາຢ່າງລະອຽດຮອບຄອບບໍ່ດັ່ງນັ້ນແລ້ວຈະເກີດມີການຊ້ອນທັບກັນລະຫວ່າງວຽກງານການດູແລຮັກສາ ແລະ ການເກັບກູ້ຜົນຜະລິດຂອງໝາກເຍົາ ແລະ ພືດຊະນິດອື່ນໆ.

**ລາຄາທີ່ຍຸດຕິທຳ ແລະ ການຮັບປະກັນທາງດ້ານການຕະຫຼາດ**

ໃນປະຈຸບັນ ໄດ້ມີຄວາມຮຽກຮ້ອງຕ້ອງການສູງຢ່າງຕໍ່ເນື່ອງຕໍ່ກັບແກ່ນໝາກເຍົາ ຢູ່ໃນ ສປປ.ລາວ. ແຕ່ເຖິງຢ່າງໃດກໍ່ຕາມ, ບັນຫາສຳຄັນຕົ້ນຕໍກໍ່ຄື ການຂາດການຕິດຕໍ່ພົວພັນກັນຢ່າງລະອຽດລະຫວ່າງຊາວກະສິກອນ ແລະ ບໍລິສັດ. ບໍ່ແມ່ນທຸກບໍລິສັດທີ່ບໍ່ພຽງແຕ່ຈະບໍ່ກຳນົດລາຄາທີ່ຍຸດຕິທຳ ແຕ່ຍັງບໍ່ໃຫ້ຄຳໝັ້ນສັນຍາທີ່ໜັກແໜ້ນວ່າ ຈະມີການເກັບຊື້ຜົນຜະລິດແກ່ນໝາກເຍົາທີ່ປະຊາຊົນສາມາດຜະລິດໄດ້. ຮູບການດຳເນີນໂຄງການແບບຜູກພັນສັນຍາກັບຊາວກະສິກອນ ແມ່ນຍັງບໍ່ທັນໄດ້ຮັບການຈັດຕັ້ງປະຕິບັດຢ່າງເອົາຈິງເອົາຈັງ ແລະ ຊາວກະສິກອນທີ່ອາໃສຢູ່ໃນຊົນນະບົດຍັງຢູ່ໃນຖານະທີ່ບໍ່ອາດຈະສາມາດຕໍ່ລອງລາຄາໄດ້.

ຂໍ້ແນະນຳເພີ້ມເຕີມ: ລາຄາຂອງແກ່ນໝາກເຍົາຕ້ອງໄດ້ຮັບການປະເມີນ ແລະ ກຳນົດຮ່ວມກັນລະຫວ່າງບໍລິສັດ ແລະ ຊາວກະສິກອນ. ຖ້າຫາກປະກົດເຫັນວ່າຊາວກະສິກອນໄດ້ຮັບການເອົາປຽບຈາກພໍ່ຄ້າ, ໂຄງການປູກໝາກເຍົາກໍ່ຄວນຈະຖືກຍົກເລີກ.

**V.II ໝາກເຍົາໃນການເປັນວັດຖຸດິບສຳລັບການຜະລິດນ້ຳມັນກະຊວານຊີວະພາບເພື່ອໃຊ້ແທນນ້ຳມັນກະຊວານຈາກໄຕ້ດິນ**

ລັດຖະບານລາວໄດ້ວາງເປົ້າໝາຍທີ່ຈະຫຼຸດຜ່ອນການນຳໃຊ້ນ້ຳມັນຈາກໄຕ້ດິນໃຫ້ໄດ້ 5% ໃນປີ 2015. ມີການຄາດຄະເນວ່າ: ການນຳໃຊ້ນ້ຳມັນກາຊວນຈະເພີ້ມຂຶ້ນເຖິງ 393 ລ້ານລິດ ຕໍ່ ປີ ໃນປີ 2015[8]. ນັ້ນກໍ່ໝາຍວ່າວ່າຈະຕ້ອງຜະລິດນ້ຳມັນກາຊວນຊີວະພາບໃຫ້ໄດ້ ປະມານ 19.7 ລ້ານລິດ ຕໍ່ ປີ. ຍ້ອນວ່າຜົນຜະລິດຂອງໝາກເຍົາຍັງບໍ່ທັນສາມາດທີ່ຈະກຳນົດໄດ້ແນ່ນອນ, ມັນຈຶ່ງເປັນການຍາກທີ່ຈະສາມາດກຳນົດເນື້ອທີ່ປູກໃຫ້ພຽງພໍຕໍ່ຄວາມຕ້ອງການໄດ້. ເຖິງແນວໃດກໍ່ຕາມ, ຖ້າຫາກວ່າຈະຕ້ອງມີການຜະລິດນ້ຳມັນກາຊວນຊີວະພາບຈາກນ້ຳມັນໝາກເຍົາແລ້ວ ກໍ່ມີຄວາມຈຳເປັນທີ່ຈະຕ້ອງຜະລິດແກ່ນໝາກເຍົາໃຫ້ໄດ້ປະມານ 78,000 ໂຕນ ຕໍ່ ປີ. ເມື່ອນຳມາປຽບທຽບກັບສະຖິຕິການຜະລິດຢູ່ໃນ ສປປ.ລາວ ປະຈຳປີ 2006, ຜົນຜະລິດຖົ່ວເຫຼືອງແມ່ນປະມານ 12,000 ໂຕນ ຕໍ່ ປີ ແລະ ຜົນຜະລິດສາລີ ມີ ປະມານ 500,000 ໂຕນ ຕໍ່ ປີ[9]. ໃນສະຖານະການປະຈຸບັນນີ້, ຄວາມຕ້ອງການດັ່ງກ່າວບໍ່ອາດສາມາດທີ່ຈະທົດແທນໄດ້ດ້ວຍໝາກເຍົາ ພາຍໃນ 5-10 ປີ ຂ້າງໜ້າ.

ຄຳແນະນຳເພີ່ມເຕີມ: ພືດພະລັງງານ ເຊັ່ນ: ຖົ່ວເຫຼືອງ, ໝາກອື, ນ້ຳມັນທີ່ໄດ້ຈາກແກ່ນພືດ, ແກ່ນຕາວັນ, ແຕ້ຮອຍ, ໝາກງ່າ, ແລະ ພືດສະນິດອື່ນໆ ຄວນຈະໄດ້ຮັບການພິຈາລະນາໃຫ້ເປັນແຫຼ່ງວັດຖຸດິບ ເພື່ອທີ່ຈະນຳໃຊ້ເຂົ້າໃນການຜະລິດນ້ຳມັນກາຊວນຊີວະພາບ.

**V.III ໝາກເຍົາສຳລັບການຜະລິດກະແສໄຟ້າໃນຊົນນະບົດ**

ການຜະລິດກະແສໄຟຟ້າຈາກນ້ຳມັນໝາກເຍົາ ໝາຍເຖິງການເພີ່ມຕ່ອງໂສ້ມູນຄ່າພາຍໃນບ້ານທີ່ມີການປູກໝາກເຍົາ. ເຖິງແນວໃດກໍ່ຕາມ, ເນື່ອງຈາກວັດຖຸອຸປະກອນຮັບໃຊ້ເຂົ້າໃນການຜະລິດ ແລະ ການດັດແປງເຄື່ອງຈັກຍັງມີລາຄາສູງ, ມັນຈຶ່ງຂ້ອນຂ້າງເປັນໄປໄດ້ຍາກ. ຍິ່ງໄປກວ່ານັ້ນ, ການຊົມໃຊ້ພະລັງງານຢູ່ໃນຊົນນະບົດຍັງມີລັກສະນະຈຳກັດ ຈຶ່ງເຮັດໃຫ້ລາຍຮັບຈາກການຈຳໜ່າຍກະແສໄຟ້າຍັງມີໜ້ອຍ[10].

## VI. *ຄວາມທ້າທາຍສຳລັບຊາວກະສິກອນຂະໜາດນ້ອຍ*

ດັ່ງທີ່ໄດ້ອະທິບາຍໃນຫົວຂໍ້ ຄວາມອາດສາມາດຂອງໝາກເຍົາໃນຂ້າງເທິງນັ້ນ, ໃນຫົວຂໍ້ນີ້ພວກເຮົາຈະໄດ້ນຳສະເໜີກ່ຽວກັບຂໍ້ຈຳກັດສະເພາະຕໍ່ການຍອມຮັບ ແລະ ການພັດທະນາຂອງໂຄງການປູກໝາກເຍົາເປັນເສດຖະກິດຂະໜາດໜ້ອຍຂອງຊາວກະສິກອນຢູ່ໃນ ສປປ.ລາວ. ໂດຍທົ່ວໄປແລ້ວ, ຫົວໃຈສຳຄັນໃນການຍອມຮັບ ແລະ ການພັດທະນາໂຄງການປູກໝາກເຍົາເປັນເສດຖະກິດຂະໜາດນ້ອຍໃນຊຸມຊົນໃນຫຼາຍໆປະເທດນັ້ນ ກໍ່ຄື: ການຂາດການຖ່າຍທອດຄວາມຮູ້ ແລະ ການສ້າງຄວາມອາດສາມາດໃຫ້ກັບຊາວກະສິກອນ, ການຂາດການວາງແຜນການທາງດ້ານເສດຖະກິດຂອງບໍລິສັດ ແລະ ຊາວກະສິກອນ, ການຂາດຄວາມເຂົ້າໃຈທາງດ້ານການຕະຫຼາດ, ການຂາດຄວາມຮູ້ທາງດ້ານກົດໝາຍທີ່ໃຊ້ອ້າງອີງໃນສັນຍາລະຫວ່າງບໍລິສັດ ແລະ ຊາວກະສິກອນ.

ສິ່ງທີ່ທ້າທາຍໂດຍລວມທຳອິດ ບໍລິສັດ ແລະ ຜູ້ປະກອບການ (ເຊັ່ນ: NGO, ສະຖາບັນຕ່າງໆ ແລະ ສະມາຄົມ) ໃນແຕ່ລະປະເທດແມ່ນໄດ້ໃຫ້ຂໍ້ມູນຂ່າວສານ ຫຼື ການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ຕະຫຼອດຮອດການລົງຕິດຕາມກວດກາທີ່ຜິດພາດແກ່ຊາວກະສິກອນ. ຍິ່ງໄປກວ່ານັ້ນ, ບໍລິສັດຍັງບໍ່ໄດ້ໃຫ້ຄຳໝັ້ນສັນຍາທາງດ້ານການຜະລິດ, ການຄິດໄລ່ກຳໄລ ແລະ ໄລຍະເວລາຂອງການເກັບກູ້ຜົນຜະລິດໃນໄລຍະທຳອິດ ເຊິ່ງສິ່ງຕ່າງໆເລົ່ານີ້ເປັນສາຍເຫດໃຫ້ມີຂໍ້ຂັດແຍ່ງ ແລະ ການຍຸດສະງັກທາງດ້ານການຜະລິດ. ບັນຫາດັ່ງກ່າວນີ້ຍັງໄດ້ປະກົດອອກມາໃຫ້ເຫັນ ໃນຜູ້ປະກອບການລາຍອື່ນໆທີ່ກ່ຽວຂ້ອງໃນໂຄງການປູກໝາກເຍົາ ເຊິ່ງພວກເຂົາກໍ່ໄດ້ນຳເອົາຂໍ້ມູນດັ່ງກ່າວເຂົ້າໃນການວິເຄາະໂຄງການປູກຂະໜາດໃຫຍ່. ຍ້ອນການຂາດການວາງແຜນໂຄງການທີ່ເໝາະສົມ, ມັນມີຄວາມເປັນໄປໄດ້ຍາກທີ່ຈະປະເມີນໂອກາດທີ່ແທ້ຈິງໃນດ້ານຜົນປະໂຫຍດ ໂດຍສະເພາະແມ່ນກຳໄລທີ່ຈະໄດ້ຮັບ ຕະຫຼອດຮອດການພັດທະນາດ້ານການຕະຫຼາດ ເຊິ່ງເປັນສາເຫດໃຫ້ໂຄງການບໍ່ປະສົບຜົນສຳເລັດ.

ຄວາມທ້າທາຍດ້ານອື່ນໆ ທີ່ປະກົດອອກໃຫ້ເຫັນໃນປະເທດອື່ນໆ ກໍ່ຄືການສ້າງສະຖາບັນ ເຊິ່ງຈະນຳມາທາງດ້ານການແຂ່ງຂັນດ້ານການຕະຫຼາດ. ການຂາດ ການສະໜັບສະໜູນຈາກອົງການຂອງລັດ ແລະ ລະບົບກົດໝາຍທີ່ຈະຮັບປະກັນດ້ານສັນຍາຖືໄດ້ວ່າເປັນຄວາມທ້າທາຍຢ່າງໜຶ່ງເຊັ່ນດຽວກັນ. ພໍ່ຄ້າທັງຫຼາຍອາດຈະຊື້ແກ່ນຈາກຊາວກະສິກອນໃນລາຄາທີ່ຕ່ຳກວ່າລາຄາທີ່ກຳນົດໄວ້ໃນທ້ອງຕະຫຼາດ ຫຼື ຕ່ຳກວ່າລາຄາທີ່ໄດ້ກຳນົດໄວ້ໃນເບື້ອງຕົ້ນໂດຍທີ່ບໍ່ໃຫ້ຄວາມສົນໃຈຕໍ່ກັບສັນຍາທີ່ເຄີຍເຊັນກັນໄວ້ກ່ອນໜ້ານັ້ນ. ໃນພາກຕໍ່ໄປນີ້, ຄວາມທ້າທາຍທີ່ສຳຄັນຕໍ່ການຍອມຮັບ ແລະ ການ



[8] ການສຳຫຼວດການນຳໃຊ້ນ້ຳມັນເພື່ອການອະນຸລັກຮັກສາການນຳໃຊ້ພະລັງງານຢ່າງມີປະສິດຕິພາບເພື່ອສົ່ງເສີມເຕັກໂນໂລຍີໃໝ່ດ້ານນ້ຳມັນກະຊວານຊີວະພາບຢູ່ໃນ ສປປ.ລາວ, ພຶດສະພາ 2008, www.lao-ire.org/documents/reports/0856/-LIRE-report_Biofuel-NEDO.pdf

[9] ສູນສະຖິຕິກະສິກຳ, ກະຊວງກະສິກຳ ແລະ ປ່າໄມ້, ວຽງຈັນ 2006.

[10] FONDEM, ການສຶກສາດ້ານການນຳໃຊ້ນ້ຳມັນກາຊວນຊີວະພາບສຳລັບການຜະລິດກະແສໄຟ້າເພື່ອການອະນຸລັກສິ່ງແວດລ້ອມໃນແຂວງຫຼວງພະບາງ, 2006

ພັດທະນາດ້ານການປູກພາກເຍົາເປັນເສດຖະກິດໃນ ສປປ.ລາວ ໄດ້ຖືກກໍານົດໄວ້ໂດຍລະອຽດ.

### VI.I ຊ່ອງຫວ່າງໃນການຕິດຕໍ່ພົວພັນລະຫວ່າງ ຜູ້ປະກອບການ

ຄວາມທ້າທາຍທໍາອິດສໍາລັບຊາວກະສິກອນຢູ່ໃນ ສປປ.ລາວ ກໍ່ຄື ຊ່ອງຫວ່າງໃນການຕິດຕໍ່ພົວພັນລະຫວ່າງຜູ້ປະກອບການ. ຊ່ອງຫວ່າງເຫຼົ່ານີ້ບໍ່ໄດ້ເກີດຂຶ້ນພຽງແຕ່ຊາວກະສິກອນເອງ, ແຕ່ມັນເກີດຂຶ້ນລະຫວ່າງຊາວກະສິກອນ ແລະ ບໍລິສັດ, ລະຫວ່າງບໍລິສັດ ແລະ ລັດຖະບານ, ແລະ ລະຫວ່າງຊາວກະສິກອນ ແລະກັບ ລັດຖະບານ.

ອີງຕາມການລົງສໍາຫຼວດສະພາບພື້ນທີ່ຕົວຈິງຂອງ LIRE ເມື່ອບໍ່ດົນມານີ້, ໄດ້ມີການຕິດຕໍ່ພົວພັນກັນຢ່າງຜິດພາດລະຫວ່າງຊາວກະສິກອນທີ່ອາໃສຢູ່ໃນທ້ອງຖິ່ນ ຜູ້ທີ່ໄດ້ດໍາເນີນໂຄງການປູກພາກເຍົາ. ບັນຫາທີ່ສໍາຄັນທີ່ພົບກໍ່ຄື ລາຄາທີ່ກໍານົດໃນທ້ອງຕະຫຼາດ ແລະ ລາຍລະອຽດຂອງສັນຍາ. ປັດໃຈຕົ້ນຕໍຂອງບັນຫາເຫຼົ່ານີ້ກໍ່ຄືວ່າ ຊາວກະສິກອນບໍ່ໄດ້ຮັບການຈັດຕັ້ງທີ່ດີ ແລະ ບໍ່ໄດ້ຢູ່ໃນຖານະທີ່ຕໍ່ລອງໄດ້.

ໃນທາງດຽວກັນນີ້, ການຕິດຕໍ່ພົວພັນລະຫວ່າງຊາວກະສິກອນ ແລະ ບໍລິສັດຍັງມີຂໍ້ຈໍາກັດ ໂດຍສະເພາະໃນດ້ານການໃຫ້ການຊ່ວຍເຫຼືອທາງດ້ານເຕັກນິກ ແລະ ການຄາດຄະເນທາງດ້ານການຜະລິດ ແລະ ຜົນກໍາໄລທີ່ຈະໄດ້ຮັບເໝືອນດັ່ງທີ່ເກີດຂຶ້ນຢູ່ໃນຫຼາຍໆປະເທດ. ການຕິດຕໍ່ພົວພັນ ແລະ ການຮ່ວມມືລະຫວ່າງບໍລິສັດ ແລະ ອົງການຂອງລັດກໍ່ຍັງມີຂໍ້ຈໍາກັດເຊັ່ນດຽວກັນ. ໂດຍທົ່ວໄປແລ້ວ, ຕ່າງຝ່າຍຕ່າງກໍ່ຂາດຄວາມຮັບຜິດຊອບ ແລະ ບໍ່ໄດ້ມີການທ້າງທາກະກຽມລະຫວ່າງຊາວກະສິກອນ ແລະ ພາກສ່ວນອື່ນໆທີ່ກ່ຽວຂ້ອງ. ສຸດທ້າຍ, ນອກຈາກຈະມີຄວາມພະຍາຍາມຢ່າງຕໍ່ເນື່ອງເພື່ອແກ້ໄຂບັນຫາຕ່າງໆແລ້ວ, ຂໍ້ມູນຂ່າວສານລະຫວ່າງອົງການຂອງລັດ ແລະ ຊາວກະສິກອນຄວນໄດ້ຮັບການປັບປຸງໄປໃນທາງທີ່ດີຂຶ້ນ. ສະຫຼຸບລວມແລ້ວ, ຍັງຖືໄດ້ວ່າຍັງມີຂໍ້ຜິດພາດທາງດ້ານການຕິດຕໍ່ພົວພັນ ຫຼື ຂາດການຕິດຕໍ່ພົວພັນລະຫວ່າງຜູ້ໃຫ້ການສົ່ງເສີມ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ. ດັ່ງນັ້ນ, ສິ່ງດັ່ງກ່າວນີ້ ຈຶ່ງເປັນສາເຫດໃຫ້ກັບການນໍາໄປສູ່ການຂາດຄວາມເຊື່ອໝັ້ນ, ການປູກພາກເຍົາທີ່ບໍ່ມີປະສິດຕິພາບ ແລະ ການຕະຫຼາດທີ່ລົ້ມເຫຼວ.

### VI.II ການຂາດຕະຫຼາດ, ການປະຕິບັດທີ່ເປັນການຜູກຂາດແຕ່ພຽງຝ່າຍດຽວ ແລະ ການປະຕິບັດສັນຍາທີ່ບໍ່ມີປະສິດຕິຜົນ

ນັບຕັ້ງແຕ່ຕະຫຼາດບໍ່ໄດ້ຮັບການພັດທະນາ ແລະ ບໍ່ມີການສະໜັບສະໜູນໃຫ້ແກ່ສະມະຄົມຊາວກະສິກອນ, ຊາວກະສິກອນກໍ່ບໍ່ໄດ້ຮັບການຈັດຕັ້ງເປັນກຸ່ມ ແລະ ບໍ່ໄດ້ຢູ່ໃນຖານະທີ່ສາມາດຕໍ່ລອງໄດ້. ການຂາດຄວາມອາດສາມາດທາງດ້ານກົດໝາຍ ແລະ ການຂາດການແຂ່ງຂັນດ້ານການຕະຫຼາດ, ໝາຍຄວາມວ່າ ຊາວກະສິກອນຍາມໃດກໍ່ຢູ່ໃນທ່າເສຍປຽບສະເໝີ. ໃນປະຈຸບັນນີ້, ໄດ້ມີການຜູກຂາດທາງດ້ານການປູກພາກເຍົາເປັນເສດຖະກິດ ເຊິ່ງມີພຽງແຕ່ບໍລິສັດ ຫຼື ພໍ່ຄ້າເທົ່ານັ້ນທີ່ລົງໄປແຕ່ລະເມືອງ ຫຼື ແຕ່ລະບ້ານ. ຊາວກະສິກອນຈໍາເປັນຕ້ອງໄດ້ຍອມຮັບເອົາລາຄາທີ່ທາງບໍລິສັດ ຫຼື ພໍ່ຄ້າກໍານົດເອົາໄວ້. ລາຄາທີ່ກໍານົດເອົາໄວ້ນັ້ນ ແມ່ນຕໍ່າກ່ວາລາຄາທີ່ແທ້ຈິງ ຫຼື ລາຄາທີ່ເຄີຍກໍານົດໄວ້ໃນສັນຍາ. ເນື່ອງຈາກການບັງຄັບໃຊ້ໃນສັນຍາ ແລະ ການເຄົາລົບຕໍ່ສັນຍາບໍ່ໄດ້ຮັບການປະຕິບັດລະຫວ່າງບໍລິສັດ ແລະ ຊາວກະສິກອນ, ມັນຈຶ່ງອາດຈະເປັນຄວາມຮັບຜິດຊອບຂອງທາງພາກລັດທີ່ຈະຕ້ອງລົງໄປໃຫ້ການສົ່ງເສີມ ແລະ ແນະນໍາດ້ານການປະຕິບັດສັນຍາໃຫ້ກັບປະຊາຊົນ.

ຕະຫຼາດທີ່ມີຄວາມໝັ້ນຄົງ ແລະ ຍຸດຕິທໍາຈະມີຄວາມຍຸ້ງຍາກທີ່ຈະພັດທະນາ ຕໍ່ໄປໄດ້ຖ້າຫາກວ່າບໍ່ມີການປະສານງານ ແລະ ການເຄົາລົບລະຫວ່າງຜູ້ປະກອບການ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງໃນໂຄງການທັງໝົດ. ໃນຂະນະທີ່ບໍ່ສາມາດລະບຸໄດ້ວ່າແມ່ນໃຜຈະເປັນຜູ້ດໍາເນີນການດ້ານການຕະຫຼາດ ຫຼື ເຂົ້າມາເກັບຊື້ທີ່ແນ່ນອນ, ບາດກ້າວສໍາຄັນກ່ອນອື່ນໝົດກໍ່ຄືວ່າຈະຕ້ອງກໍານົດໃຫ້ໄດ້ວ່າແມ່ນໃຜຈະເປັນຜູ້ມີບົດບາດຕົ້ນຕໍເພື່ອເຂົ້າມາດໍາເນີນການໃນດ້ານນີ້ໃນອະນາຄົດ. ຖ້າຫາກວ່າສາມາດລະບຸໄດ້ວ່າໃຜຈະເປັນຜູ້ດໍາເນີນການດ້ານການຕະຫຼາດ, ມັນຈະມີຄວາມເປັນໄປໄດ້ທີ່ຈະດໍາເນີນການສົ່ງເສີມການປະສານງານລະຫວ່າງຜູ້ຊື້ ແລະ ທັງເປັນການຮັບປະກັນວ່າໂຄງການດັ່ງກ່າວຈະໄດ້ຮັບການປະຕິບັດໄປດ້ວຍຮູບການຍຸດຕິທໍາ.

### VI.III ການຂາດການສົ່ງເສີມ ແລະ ຂໍ້ມູນຂ່າວສານ

ຄວາມທ້າທາຍອັນທີ່ສາມໃນ ສປປ.ລາວ ກໍ່ຄືການຂາດການສົ່ງເສີມ ແລະ ຂໍ້ມູນຂ່າວສານທີ່ຈະຕອບສະໜອງໃຫ້ກັບຊາວກະສິກອນຂະໜາດນ້ອຍ ເຊິ່ງເປັນປະເດັນສໍາຄັນທີ່ຈະສາມາດຊ່ວຍໃຫ້ເຂົາເຈົ້າເຂົ້າເຖິງຕະຫຼາດທີ່ແທ້ຈິງໄດ້. ຂະແໜງການທີ່ວ່ານີ້ໄດ້ແກ່ຂະແໜງການທີ່ກ່ຽວຂ້ອງກັບການໃຫ້ການບໍລິການຂັ້ນພື້ນຖານກ່ຽວກັບໂຄງຮ່າງພື້ນຖານ, ຂະແໜງການທີ່ໃຫ້ການບໍລິການ ແລະ ການສະໜັບສະໜູນດ້ານການເງິນ ແລະ ການຕະຫຼາດ ແລະ ຂະແໜງການທີ່ໃຫ້ການຊ່ວຍເຫຼືອດ້ານເຕັກນິກວິຊາການ.

ຍ້ອນວ່າຊາວກະສິກອນຢູ່ໃນພື້ນທີ່ທີ່ຫ່າງໄກຊອກຫຼີກ ແລະ ໂຄງລ່າງພື້ນຖານຍັງບໍ່ທັນສາມາດທີ່ຈະຊ່ວຍໃຫ້ພວກເຂົາເຂົ້າເຖິງຕະຫຼາດໄດ້, ມູນຄ່າການຂົນສົ່ງ ແລະ ຄວາມສະດວກສະບາຍດ້ານການຂົນສົ່ງແກ່ນແມ່ນຕ້ອງໃຊ້ງົບປະມານຫຼາຍ ແລະ ທັງເປັນພາລະໜັກໃຫ້ກັບຊາວກະສິກອນ. ຍ້ອນເຫດຜົນດັ່ງກ່າວນີ້, ມັນເປັນການຍາກທີ່ຈະເຊື່ອມໂຍງຊາວກະສິກອນເຂົ້າກັບຕະຫຼາດ ແລະ ຖືໄດ້ວ່າເປັນບັນຫາທີ່ຍຸ້ງຍາກທີ່ສຸດສໍາລັບໂຄງການປູກພາກເຍົາເປັນເສດຖະກິດ.

ຂໍ້ຈໍາກັດດ້ານອື່ນໆທີ່ຊາວກະສິກອນຕ້ອງເອົາຊະນະໃຫ້ໄດ້ນັ້ນກໍ່ຄືການເຂົ້າເຖິງຂໍ້ມູນຂ່າວສານດ້ານການຕະຫຼາດ. ອີງຕາມຄໍາໃຫ້ສໍາພາດຂອງຊາວກະສິກອນສ່ວນໃຫຍ່ໃນຊ່ວງໄລຍະເວລາທີ່ LIRE ລົງໄປສໍາຫຼວດຂໍ້ມູນໃນພື້ນທີ່ຕົວຈິງກໍ່ພົບວ່າພວກເຂົາໄດ້ຮັບຂໍ້ມູນຂ່າວສານໜ້ອຍ ກ່ຽວກັບຕະຫຼາດຂອງພາກເຍົາໂດຍສະເພາະຂໍ້ມູນຂ່າວສານດ້ານລາຄາ ແລະ ແນວໂນ້ມທາງດ້ານການຕະຫຼາດ. ຊາວກະສິກອນໄດ້ຮັບຂໍ້ມູນຂ່າວສານທັງໝົດກ່ຽວກັບພາກເຍົາຈາກບໍລິສັດທີ່ຕອບສະໜອງແກ່ນພັນ ແລະ ຈາກຊາວບ້ານຄົນອື່ນໆ. ການເຂົ້າເຖິງຂໍ້ມູນຂ່າວສານດ້ານການຕະຫຼາດຂອງຊາວກະສິກອນຈະຕ້ອງໄດ້ຮັບການປັບປຸງໂດຍໄວທີ່ສຸດໂດຍສະຖາບັນຂອງລັດ ເຊັ່ນ: ຫ້ອງການກະສິກໍາ-ປ່າໄມ້ເມືອງ (ດັ່ງທີ່ໄດ້ປະຕິບັດກັບພືດເສດຖະກິດຊະນິດອື່ນໆມາແລ້ວ) ແລະ ຕ້ອງສ້າງສື່ ແລະ ອຸປະກອນການສົ່ງເສີມທີ່ເພີ່ມຂຶ້ນ. ອີງຕາມການສັງເກດຕິລາຄາຂອງ LIRE, ໂທລະພາບແມ່ນສື່ທີ່ຈະສາມາດຕອບສະໜອງຂໍ້ມູນຂ່າວສານດ້ານການຕະຫຼາດໃຫ້ກັບປະຊາຊົນໃນລະດັບກາງ. ອີກຢ່າງໜຶ່ງຂໍ້ມູນພື້ນຖານດ້ານການຕະຫຼາດ, ຊາວກະສິກອນຍັງບໍ່ໄດ້ເຂົ້າເຖິງຂໍ້ມູນພື້ນຖານດ້ານການເງິນທີ່ຈະຊ່ວຍໃຫ້ພວກເຂົາດໍາເນີນທຸລະກິດດ້ານການປູກພາກເຍົາໄດ້ຢ່າງມີປະສິດຕິພາບ.

ຂໍ້ຍຸ້ງຍາກທີ່ສຸດ ແລະ ສຸດທ້າຍໃນການສົ່ງເສີມຊາວກະສິກອນຢູ່ໃນ ສປປ. ລາວ ກໍ່ຄື ການຂາດດ້ານການຊ່ວຍເຫຼືອທາງດ້ານເຕັກນິກວິຊາການ ແລະ ການຈັດການທີ່ດີສໍາລັບການປູກ ແລະ ການເກັບກູ້. ພາກເຍົາໃນການເປັນພືດເສດຖະກິດຍັງຄົງເປັນສິ່ງໜຶ່ງທີ່ຖືວ່າຍັງໃໝ່ໃນ ສປປ.ລາວ. ອີງຕາມການລົງສໍາຫຼວດຕົວຈິງຂອງ LIRE ໃນໄລຍະຜ່ານມາກໍ່ພົບວ່າຊາວກະສິກອນຍັງມີທັກສະ ແລະ ຄວາມຮູ້-ຄວາມສາມາດທີ່ຍັງຕໍ່າໃນດ້ານການປູກພາກເຍົາ. ການຂາດການຊ່ວຍເຫຼືອດ້ານເຕັກນິກວິຊາການພ້ອມທັງການຂາດຄວາມຮູ້ດ້ານການຈັດຕັ້ງປະຕິບັດທີ່ດີ ແມ່ນສິ່ງໜຶ່ງທີ່ບໍ່ແນ່ນອນໃນປະຈຸບັນ ເຊິ່ງທາງສະຖາບັນ ຫຼື ອົງການຈັດຕັ້ງຂອງລັດຈະຕ້ອງເປັນຜູ້ທີ່ມີບົດບາດທີ່ສຸດໃນການຕອບສະໜອງດ້ານຂໍ້ມູນຂ່າວສານໃຫ້ກັບປະຊາຊົນ.

ສະຫຼຸບລວມແລ້ວ, ໃນພາບລວມຂອງສະຖານະການປະຈຸບັນ, ຊາວກະສິກອນຂະໜາດນ້ອຍໃນ ສປປ.ລາວ ຍັງຈະຕ້ອງເປັນຜູ້ທີ່ມີບົດບາດສໍາຄັນທີ່ຈະຕອບສະໜອງດ້ານແຮງງານ, ທີ່ດິນ, ແລະ ເງິນເຂົ້າໃນການປູກພືດເສດຖະກິດໃໝ່ນີ້ ໂດຍທີ່ບໍ່ທັນໄດ້ຮັບການຊ່ວຍເຫຼືອດ້ານການຕະຫຼາດ, ເຕັກນິກວິຊາການ ຫຼື ການຊ່ວຍເຫຼືອດ້ານກົດໝາຍ ຫຼື ເວົ້າໃຫ້ເຂົ້າໃຈງ່າຍໆແລ້ວກໍ່ຄືວ່າ: ຊາວກະສິກອນບໍ່ມີຄວາມຍິນດີທີ່ຈະລົງທຶນທັງໝົດເຂົ້າໃນການປູກພາກເຍົາເປັນພືດເສດຖະກິດ ຖ້າຫາກວ່າບໍ່ມີການຄໍ້າປະກັນທາງດ້ານປະລິມານແກ່ນທີ່ຕ້ອງການ ແລະ ການກໍານົດລາຄາທີ່ແນ່ນອນ. ຍິ່ງໄປກວ່ານັ້ນ, ພວກເຂົາຍັງບໍ່ຕ້ອງການທີ່ຈະເສຍເງິນລົງທຶນໃນໂຄງການດັ່ງກ່າວ ຖ້າຫາກວ່າພວກເຂົາບໍ່ໄດ້ຮັບຂໍ້ມູນຂ່າວສານດ້ານການຕະຫຼາດທີ່ເຊື່ອຖືໄດ້. ໃນທາງທິດສະດີແລ້ວ, ມັນເປັນທີ່ຍອມຮັບກັນວ່າ ຊາວກະສິກອນຜູ້ທີ່ມີລາຍໄດ້ໜ້ອຍບໍ່ຕ້ອງການທີ່ຈະມີຄວາມສ່ຽງຕໍ່ກັບໂຄງການປູກພາກເຍົາ; ແຕ່ໃນຄວາມເປັນຈິງແລ້ວ, ມັນ

ເປັນທີ່ຮັບຮູ້ກັນດີວ່າຊາວກະສິກອນກຳລັງຕົກຢູ່ໃນພາວະສ່ຽງແທນທີ່ຈະຢູ່ໃນສະພາບທີ່ຈະໄດ້ຮັບໂອກາດ. ເພື່ອເຮັດຊ່ວຍໃຫ້ຊາວກະສິກອນຂະໜາດນ້ອຍປະສົບຜົນສຳເລັດ ປະເດັນຕ່າງໆທີ່ກ່າວມານັ້ນຕ້ອງໄດ້ນຳມາພິຈາລະນາເພື່ອຫາທາງແກ້ໄຂ.

---

## VII. *ໂອກາດ*

ຜ່ານການທຳຄວາມເຂົ້າໃຈກັບຂໍ້ຈຳກັດຕໍ່ການຮອງຮັບ ແລະ ຄວາມທ້າທາຍສະເພາະທີ່ມີຕໍ່ຊາວກະສິກອນທີ່ປູກໝາກເຍົາຂະໜາດນ້ອຍຢູ່ໃນ ສປປ.ລາວ, ມັນມີຄວາມເປັນໄປໄດ້ທີ່ຈະກຳນົດທິດທາງ ແລະ ໂອກາດທີ່ຈະແກ້ໄຂບັນຫາດັ່ງກ່າວ. ໃນເນື້ອຫາຕໍ່ໄປນີ້, ພວກເຮົາໄດ້ມີການນຳໂອກາດສຳລັບລິເລີ່ມການຈັດຕັ້ງປະຕິບັດ. ເງື່ອນໄຂລະອຽດສຳລັບການຮັບມືຕໍ່ກັບຄວາມທ້າທາຍຕ່າງໆເຫຼົ່ານີ້ຈະຕ້ອງໄດ້ຮັບການພັດທະນາຂຶ້ນພາຍຫຼັງທີ່ມີການພິຈາລະນາຄົ້ນຄວ້າຢ່າງລະອຽດທີ່ຖ້ວນແລ້ວ.

**ການນຳໃຊ້ຊັບພະຍາກອນທີ່ມີຢູ່ສຳລັບການປັບປຸງຄຸນນະພາບ ຂອງຂະແໜງການສົ່ງເສີມ**

ຂະແໜງການສົ່ງເສີມກະສິກຳ ເຊິ່ງເປັນສ່ວນໜຶ່ງຂອງອົງການຈັດຕັ້ງຂອງລັດຖະບານລ້ວນແລ້ວແຕ່ເຄີຍໄດ້ຮັບປະສົບປະການອັນລ້ຳຄ່າຜ່ານມາແລ້ວ ຈາກວຽກງານການສົ່ງເສີມກະສິກຳໃນດ້ານອື່ນໆ ເຊັ່ນ: ການປູກຢາງພາລາ, ລະບົບການຜະລິດກາເຟອິນຊີ, ການປູກໄມ້ແບບຍືນຍົງ ແລະ ອື່ນໆ. ຖ້າຫາກວ່າຊັບພະຍາກອນເຫຼົ່ານີ້ສາມາດຖືກນຳກັບໃຊ້ເພື່ອຊ່ວຍ ແລະ ຝຶກພະນັກງານກະສິກຳເມືອງ ແລະ ຊາວກະສິກອນເຂົ້າໃນຕ່ອງໂສ້ການຕະຫຼາດຂອງໝາກເຍົາໄດ້, ຊາວກະສິກອນທີ່ຢູ່ຫ່າງໄກສອກຫຼີກກໍ່ຈະມີຄວາມເຂັ້ມແຂງ ແລະ ພັດທະນາໄປໃນດ້ານທີ່ຍືນຍົງໄດ້. ເພື່ອບັນລຸຕາມເປົ້າໝາຍດັ່ງກ່າວ, ພະນັກງານສົ່ງເສີມຕ້ອງສາມາດເຂົ້າເຖິງຂໍ້ມູນຂ່າວສານດ້ານເຕັກນິກວິຊາການເຊັ່ນ: ການຈັດຕັ້ງທີ່ດີທີ່ສຸດ ຫຼື ເຄື່ອງມືທີ່ຊ່ວຍໃນການຕັດສິນໃຈ. ໃນກໍລະນີນີ້, ການຮ່ວມມືກັບພາກສ່ວນເອກະຊົນອາດຈະຊ່ວຍເຮັດໃຫ້ການປະຕິບັດວຽກງານໄດ້ດີຂຶ້ນ ແລະ ມີຜົນປະໂຫຍດຫຼາຍຂຶ້ນກວ່າເກົ່າ.

**ການສ້າງຄວາມເຂັ້ມແຂງໃຫ້ກັບບົດບາດຂອງຊາວກະສິກອນໂດຍການສ້າງຕັ້ງສະມາຄົມຊາວກະສິກອນທີ່ປູກໝາກເຍົາ**

ອີງຕາມປະສົບປະການຂອງທີມງານທີ່ລົງໄປສຶກສາພາກສະໜາມ ໂດຍສ່ວນໃຫຍ່ແລ້ວພົບວ່າຍັງຂາດການຕິດຕໍ່ພົວພັນລະຫວ່າງຊາວນາກັບຜູ້ປະກອບການໝາກເຍົາລາຍອື່ນໆ. ການລົງທຶນໃສ່ການປູກໝາກເຍົາໃນຖານະເປັນພືດເສດຖະກິດຂອງຊາວກະສິກອນສາມາດເປັນທາງເລືອກໜຶ່ງ ໃນການສ້າງຄວາມເຂັ້ມແຂງໃຫ້ກັບບົດບາດຂອງຊາວກະສິກອນໃນການປູກໝາກເຍົາ ແລະ ການຕະຫຼາດ.

**ການສ້າງຄວາມອາດສາມາດໂດຍການສ້າງສວນສາທິດ**

ຈຸດປະສົງຂອງການສ້າງສວນສາທິດ ນອກຈາກຈະເປັນການຮຽນຮູ້ທາງດ້ານວິຊາການແລ້ວ, ຍັງເພື່ອການປະເມີນຜົນກະທົບທາງດ້ານສະພາບແວດລ້ອມ, ເສດຖະກິດ ແລະ ສັງຄົມນຳອີກດ້ວຍ. ເພື່ອພັດທະນາສວນສາທິດໃຫ້ປະສົບຜົນສຳເລັດນັ້ນ, ການສະໜັບສະໜູນດ້ານການຈັດຕັ້ງ ແລະ ການເງິນແມ່ນມີຄວາມຈຳເປັນທີ່ສຸດ. ພາຍຫຼັງທີ່ໄດ້ມີການປະຕິບັດໃນໄລຍະທຳອິດ ແລະ ມີຜົນໄດ້ຮັບ, ມັນມີຄວາມຈຳເປັນທີ່ຈະປະເມີນວ່າໂຄງການດັ່ງກ່າວຈະສາມາດຍືນຍົງຄົງຕົວຢູ່ໄດ້ໃນສະພາບຄວາມເປັນຈິງ ຫຼື ບໍ່.

ອີກຢ່າງໜຶ່ງ, ເປົ້າໝາຍຂອງສວນສາທິດແມ່ນເພື່ອສົ່ງເສີມຂະບວນການສ້າງຄວາມອາດສາມາດໂດຍການຈ້າງ ແລະ ຝຶກອົບຮົມຊາວກະສິກອນ ແລະ ພະນັກງານສົ່ງເສີມກະສິກຳເມືອງ. ການເພີ້ມຄວາມອາດສາມາດໃນທ້ອງຖິ່ນແມ່ນໜຶ່ງໃນເປົ້າໝາຍສຳຄັນໃນການປ່ຽນແປງໃໝ່ຂອງໂຄງການປູກໝາກເຍົາ ໃຫ້ກ້າວໄປສູ່ຄວາມສຳເລັດໃນອານາຄົດຂ້າງໜ້າ. ອີກດ້ານໜຶ່ງ, ຜົນການສຶກສາທີ່ໄດ້ຮັບຈາກໂຄງການສ້າງສວນສາທິດປູກໝາກເຍົາກໍ່ເປັນສິ່ງປະຈັກຕາທີ່ດີສຳລັບການຮຽນຮູ້ ແລະ ກິດຈະກຳອື່ນໆໃນຂັ້ນຕໍ່ໆໄປ ແລະ ທັງເປັນການເພີ້ມຄວາມພະຍາຍາມໃນສຶກສາຄົ້ນຄວ້າ ເພື່ອການປະເມີນຄວາມອາດສາມາດຂອງໂຄງການປູກໝາກເຍົາ.



ຮູບພາບ: ການສຶກສາກ່ຽວກັບໄລຍະການປູກ ແລະ ການໃສ່ປຸ໋ຍທີ່ແຕກຕ່າງກັນຢູ່ທີ່ສວນທົດລອງປູກໝາກເຍົາຂອງລັດວິສາຫະກິດນ້ຳມັນເຊື້ອໄຟລາວ

**ກຳນົດຊ່ອງທາງດ້ານຕະຫຼາດກ່ອນການສົ່ງເສີມການປູກໝາກເຍົາ**

ຖ້າຫາກວ່າໝາກເຍົາຖືກພິຈາລະນາໃຫ້ເປັນພືດເສດຖະກິດ, ໂຄງລ່າງພື້ນຖານໃນລະດັບຂັ້ນທ້ອງຖິ່ນ ກໍ່ສົມຄວນທີ່ຈະຕ້ອງໄດ້ຮັບການເອົາໃຈໃສ່ເປັນພິເສດ. ມູນຄ່າການຂົນສົ່ງແກ່ນແມ່ນມີສ່ວນພົວພັນເຂົ້າໃນມູນຄ່າການລົງທຶນໃນຕອນທ້າຍຂອງການດຳເນີນໂຄງການ. ເມື່ອເປັນແນວນັ້ນໂຄງການການປູກໝາກເຍົາໃນພື້ນທີ່ທີ່ຫ່າງໄກສອກຫຼີກອາດຈະເປັນເສດຖະກິດບໍ່ໄດ້[11]. ຊາວກະສິກອນໄດ້ພົບວ່າມູນຄ່າການຂົນສົ່ງເປັນສິ່ງກີດຂວາງຕໍ່ກັບການເຂົ້າສູ່ຕະຫຼາດເຊັ່ນດຽວກັນກັບກໍລະນີທີ່ໄດ້ເກີດຂຶ້ນກັບພືດຊະນິດອື່ນໆ. ມູນຄ່າການລົງທຶນທີ່ເພີ້ມຂຶ້ນ ໃນຕອນທ້າຍຂອງໂຄງການຈະເຮັດໃຫ້ຄວາມອາດສາມາດໃນການຜະລິດຫຼຸດຕ່ຳລົງ.

---

## VIII. *ບາງບົດຮຽນທີ່ດີໃນການປູກໝາກເຍົາ*

ໄປຄຽງຄູ່ກັບການຂາດເຂີນທາງດ້ານການຈັດຕັ້ງປະຕິບັດທີດີ, ຍັງມີຂໍ້ມູນແນະນຳບາງຢ່າງກ່ຽວກັບວິທີການຄັດເລືອກສະຖານທີ່ທີ່ດີທີ່ສຸດ ສຳລັບການປູກໝາກເຍົາ. ຍິ່ງໄປກວ່ານັ້ນ, ໃນປະຈຸບັນນີ້ LIRE ຍັງກຳລັງສ້າງເຄື່ອງມືເພື່ອຊ່ວຍໃນການຕັດສິນໃຈ ແລະ ຂຽນປຶ້ມຄູ່ມືທີ່ຈະຊ່ວຍຕອບສະໜອງຄວາມຮູ້ທີ່ກ່ຽວຂ້ອງກັບການປູກໝາກເຍົາໃຫ້ກັບຊາວກະສິກອນ. ຄຸນນະພາບຂອງເຄື່ອງມືເຫຼົ່ານີ້ຈະໄດ້ຮັບການປັບປຸງໃຫ້ດີຂຶ້ນ ໂດຍສົມທົບກັບຄວາມຮູ້ຂອງບໍລິສັດຕ່າງໆທີ່ມີສ່ວນກ່ຽວຂ້ອງກັບການປູກໝາກເຍົາ.

ທີມງານໃນການສຶກສາຂອງພວກເຮົາໄດ້ກຳນົດຄວາມເຂົ້າໃຈ ຕໍ່ກັບປະເດັນດັ່ງກ່າວໄວ້ໃນພາກຕໍ່ໄປນີ້ພ້ອມທັງຄວາມມຸ້ງຫວັງທີ່ຈະສ້າງຖານຄວາມຮູ້ໄວ້ສຳລັບການລິເລີ່ມໂຄງການໃນອະນາຄົດ. ສິ່ງໜຶ່ງທີ່ສຳຄັນຂອງຈຸດປະສົງຂອງການສ້າງເອກະສານສະບັບນີ້ກໍ່ເພື່ອກະຕຸກຊຸກຍູ້ໃຫ້ມີການແລກປ່ຽນຄວາມຮູ້ກັບຜູ້ປະກອບການທີ່ມີສ່ວນກ່ຽວຂ້ອງ.

---

## IX. *ສະຫຼຸບ*

**ການເຮັດສັນຍາຜູກພັນກັບຊາວກະສິກອນຂະໜາດນ້ອຍ**

ແນວຄວາມຄິດທີ່ວ່າຊາວກະສິກອນໃນປະເທດທີ່ກຳລັງພັດທະນາ ເຊັ່ນ: ປະເທດລາວສາມາດກາຍເປັນຜູ້ຜະລິດພະລັງງານ ເພື່ອປະກອບສ່ວນເຂົ້າໃນການຮັບປະກັນດ້ານພະລັງງານຂອງຊາດນັ້ນ ຕ້ອງໄດ້ພິຈາລະນາຢ່າງລະມັດລະວັງ. ສິ່ງທີ່ເປັນຂໍ້ກີດກັ້ນຂອງໝາກເຍົາກໍ່ຄືວ່າ ພືດຊະນິດນີ້ບໍ່ແມ່ນພືດທີ່ມີຖິ່ນກຳເນີດໃນປະເທດລາວຄືກັບພືດຊະນິດອື່ນໆ. ຍິ່ງໄປກວ່ານັ້ນ, ຄວາມຮູ້ກ່ຽວກັບໝາກເຍົາກໍ່ຖືວ່າຍັງມີໜ້ອຍຫຼາຍ. ການສົ່ງເສີມການປູກພືດຊະນິດນີ້

---

[11] Smits, LIRE, ການສຶກສາຄວາມເປັນໄປໄດ້ໃນການຜະລິດແກ๊ດຊີວະພາບຈາກຊີວະມວນ 2008

ໃຫ້ກັບຊາວກະສິກອນ ໂດຍນຳໃຊ້ຄວາມຮູ້ທີ່ມີຢູ່ໃນຂະແໜງການສົ່ງເສີມທີ່ມີຢູ່ໜ້ອຍຈະສິ່ງຜົນສະທ້ອນໃຫ້ການປູກໝາກເຍົາບໍ່ມີຄວາມຍືນຍົງ, ແຕ່ຈະເພີ້ມຄວາມສ່ຽງທາງດ້ານຄວາມບໍ່ເອົາໃຈໃສ່ໃນວຽກງານ. ດັ່ງນັ້ນ, ພືດຊະນິດນີ້ຍັງຖືວ່າຍັງບໍ່ແມ່ນທາງເລືອກທີ່ຈະນຳມາສົ່ງເສີມໃຫ້ກັບປະຊາຊົນຢູ່ໃນເຂດຊົນນະບົດ ແລະ ຫ່າງໄກຊອກຫຼີກປູກເປັນພືດເສດຖະກິດ. ອີກຢ່າງໜຶ່ງ, ຄວນມີການສຶກສາຄົ້ນຄວ້າຢ່າງເອົາຈິງເອົາຈັງກ່ອນມີການສົ່ງເສີມໃຫ້ປູກພືດຊະນິດດັ່ງກ່າວນີ້. ຄວາມຮຽກຮ້ອງຕ້ອງການສຳລັບພືດພະລັງງານທີ່ເພີ້ມຂຶ້ນ (ພືດທີ່ໃຫ້ນ້ຳມັນ, ທາດແປ້ງ ແລະ ນ້ຳຕານ) ຢູ່ໃນ ສປປ.ລາວ ສາມາດຄາດຫວັງໄດ້ເນື່ອງຈາກປະເທດລາວອີງໃສ່ການນຳເຂົ້ານ້ຳມັນເຊື້ອໄຟຈາກທຳມະຊາດ ເຊິ່ງມີແນວໂນ້ມວ່ານັບມື້ນັບຈະເພີ້ມຂຶ້ນເລື້ອຍໆ ໂດຍທີ່ບໍ່ທັນມີການສຳຫຼວດຫາສິ່ງທີ່ມາທົດແທນເຊັ່ນ: ນ້ຳມັນຊີວະພາບ ຫຼື ການເລີ່ມຕົ້ນປະຢັດພະລັງງານ.

ເຖິງແນວໃດກໍ່ຕາມ, ແທນທີ່ຈະສ້າງພັນທະໃຫ້ກັບຊາວກະສິກອນຢູ່ໃນຊົນນະບົດ-ກຸ່ມສ່ຽງທີ່ສຸດຂອງຕ່ອງໂສ້ງຊັບພະຍາກອນສ່ວນລວມ ຄວນຈະໄດ້ຮັບການນຳໃຊ້ຢ່າງແທດເໝາະ ເພື່ອຫຼີກລ້ຽງຄວາມພິດຫວັງທີ່ອາດຈະເກີດຂຶ້ນກັບຊາວກະສິກອນຂະໜາດນ້ອຍໃນອະນາຄົດ. ຍິ່ງໄປກວ່ານັ້ນ, ບໍລິສັດທີ່ພະຍາຍາມນຳໃຊ້ສັນຍາເພື່ອການດຳເນີນທຸລະກິດຕ້ອງພິຈາລະນາເງື່ອນໄຂຂອງແຕ່ລະເມືອງ, ແຕ່ລະບ້ານ ແລະ ແຕ່ລະຄອບຄົວ.

**ການມີສ່ວນພົວພັນຂອງບໍລິສັດທີ່ກ່ຽວຂ້ອງກັບໝາກເຍົາ**

ບໍລິສັດທີ່ມີສ່ວນພົວພັນກັບການປູກໝາກເຍົາ ທີ່ມີຊັບພະຍາກອນດ້ານການເງິນທີ່ພຽງພໍ ຕ້ອງລົງທຶນໃສ່ກັບການພັດທະນາຊັບພະຍາກອນມະນຸດ ແລະການຝຶກອົບຮົມພະນັກງານວິຊາການ. ຍິ່ງໄປກວ່ານັ້ນ, ການສ້າງສວນສາທິດທົດລອງແມ່ນມີຄວາມຈຳເປັນທີ່ສຸດທີ່ຈະຕ້ອງປະຕິບັດ. ແທນທີ່ຈະລົງທຶນໃສ່ການສ້າງສວນປູກຂະໜາດກາງ, ການສ້າງສວນສາທິດທົດລອງໃນຂະໜາດນ້ອຍ ຈະສາມາດຕອບສະໜອງປະສົບການທີ່ລ້ຳຄ່າໃນດ້ານປະລິມານຂອງຜົນຜະລິດ, ມູນຄ່າການດູແລຮັກສາ, ການເກັບກູ້ ແລະ ກິດຈະກຳອື່ນໆ.

ຂະແໜງການເອກະຊົນຄວນຈະເພີ້ມຄວາມພະຍາຍາມ ເຂົ້າໃນການສ້າງເຄືອຄ່າຍ ແລະ ຄວາມຮູ້ທີ່ໄດ້ຮັບການແລກປ່ຽນກັບອົງການຈັດຕັ້ງ ແລະ ບໍລິສັດອື່ນໆ. ເຖິງແມ່ນວ່າອົງການຈັດຕັ້ງຜູ້ທີ່ບໍ່ມີສ່ວນກ່ຽວຂ້ອງໂດຍກົງ ກັບອຸດສະຫະກຳການຜະລິດນ້ຳມັນກາຊວນຊີວະພາບ ເຊັ່ນ: WWF ຫຼື SNV ກໍ່ສາມາດປະກອບສ່ວນເຂົ້າໄດ້ເພື່ອຊ່ວຍກະຕຸກຊຸກຍູ້ການຜະລິດແບບຍືນຍົງ ແລະ ດ້ານອື່ນໆ.

ເປົ້າໝາຍຂອງການປູກໝາກເຍົາໃນຖານະເປັນພືດ ທີ່ໃຊ້ເຂົ້າໃນການຜະລິດນ້ຳມັນກາຊວນຊີວະພາບຢູ່ໃນ ສປປ.ລາວ ຕ້ອງໄດ້ຖືກນຳມາພິຈາລະນາຄືນໃໝ່. ຄວາມພະຍາຍາມທີ່ຈະລະບຸພືດທີ່ໃຫ້ນ້ຳມັນຕ້ອງໄດ້ເລີ້ມຕົ້ນຂຶ້ນແທນທີ່ຈະປະຖິ້ມໄປເລີຍໂດຍບໍ່ສົນໃຈ. ນອກຈາກການຄັດເລືອກພືດດັ່ງກ່າວແລ້ວ, ຮູບແບບຂອງການດຳເນີນທຸລະກິດທີ່ເໝາະສົມ ແລະ ການຄັດເລືອກພື້ນທີ່ການຜະລິດກໍ່ຕ້ອງຖືກນຳມາພັດທະນາໃຫ້ດີຂຶ້ນ. ຍິ່ງໄປກວ່ານັ້ນ, ນະໂຍບາຍທີ່ເໝາະສົມຕໍ່ກັບນ້ຳມັນຊີວະພາບຍັງບໍ່ໄດ້ຖືກກຳນົດຂຶ້ນມາຢ່າງຈະແຈ້ງ ແລະ ຫວັງຢ່າງຍິ່ງວ່າລັດຖະບານລາວຈະນຳສະເໜີທິດທາງໃໝ່ໃນໄວໆນີ້.

ການຊ່ວຍເຫຼືອດ້ານໝາກເຍົາ ທີ່ໄດ້ຮັບຈາກຊ່ຽວຊານທີ່ມີທັກສະດ້ານການໂຄສະນາຈາກກຸ່ມຜູ້ຜະລິດນ້ຳມັນ ແລະ ຜູ້ຜະລິດລົດຈະບໍ່ຍືນຍົງຄົງຕົວຢູ່ໄດ້ຕະຫຼອດການ. ໃນປະຈຸບັນນີ້, ໝາກເຍົາເຊິ່ງຖືກເອີ້ນກັນວ່າໄມ້ພຸ່ມເຕັ້ຍມະຫັດສະຈັນຍັງຢູ່ໃນຊ່ວງພາວະວິກິດ ແລະ ຕ້ອງການການສະໜັບສະໜູນໂດຍດ່ວນເພື່ອປ້ອງກັນບໍ່ໃຫ້ໝາກເຍົາສູນຫາຍໄປຈາກປະເທດລາວ. ການສຶກສາຄົ້ນຄວ້າໃນດ້ານຕ່າງໆກ່ຽວກັບໝາກເຍົາຈະຕ້ອງໃຊ້ເວລາຫຼາຍປີກ່ອນທີ່ຈະມີການຄາດຫວັງຕໍ່ຜົນທີ່ຈະໄດ້ຮັບທີ່ເໝາະສົມ.

---

## *X. ສູນຄົ້ນຄວ້າ-ທົດລອງດ້ານພະລັງງານ ທົດແທນລາວ (LIRE)*

ສູນຄົ້ນຄວ້າ-ທົດລອງດ້ານພະລັງງານທົດແທນລາວ (LIRE) ໄດ້ຖືກສ້າງຕັ້ງຂຶ້ນໃນເດືອນຕຸລາ ປີ 2006 ໂດຍບັນດາບໍລິສັດ, ອົງການຈັດຕັ້ງ, ແລະ ຂະແໜງການຕ່າງໆທີ່ມີວິໄສທັດໃນການສ້າງໂຕແບບສຳລັບການສຶກສາຄົ້ນຄວ້າດ້ານພະລັງງານທົດແທນໃນ ສປປ. ລາວ. LIRE ແມ່ນອົງການຈັດຕັ້ງຂອງລັດທີ່ບໍ່ຫວັງຜົນກຳໄລ (NPA) ເຊິ່ງເຮັດໜ້າທີ່ດຳເນີນການຄົ້ນຄວ້າທົດລອງດ້ານພະລັງງານທົດແທນ ພາຍໃຕ້ການຊີ້ນຳນຳພາຂອງສະຫະສະມາຄົມວິທະຍາສາດ ແລະ ວິສະວະກຳ (LUSEA) ເຊິ່ງຖືກສ້າງຕັ້ງຂຶ້ນໂດຍສະພາວິທະຍາສາດແຫ່ງຊາດ (NSC) ໃນປີ 2001.

ອົງການຈັດຕັ້ງທີ່ມີສ່ວນພົວພັນຕົ້ນຕໍ ກໍ່ຄື ບໍລິສັດ ຊັນລະບົບ ຈຳກັດ (Sunlabob Renewable Energy Ltd) ເຊິ່ງເປັນບໍລິສັດທີ່ປະສົບຜົນສຳເລັດໃນດ້ານການຕອບສະໜອງກະແສໄຟ້າແສງຕາເວັນໃຫ້ກັບຊົນນະບົດທີ່ຢູ່ຫ່າງໄກຊອກຫຼີກ. ອົງການຈັດຕັ້ງອື່ນໆທີ່ເປັນຄູ່ພາຄີໄດ້ແກ່: ຄະນະວິສະວະກຳສາດ ປະຈຳ ມະຫາວິທະຍາໄລແຫ່ງຊາດ, ກຸ່ມຊາວບ້ານ, ສະມາຄົມລາວປອດສານພິດ (LAOPP), ຈີໂອ ຊິສ໌ເຕັມ ອິນເຕີເນເຊີນນໍ ຈຳກັດ (GEO-Systems International Ltd), ສະຖາບັນຄົ້ນຄວ້າເທັກໂນໂລຢີ (TRI), ແລະ ສະມາຄົມພັດທະນາຂະແໜງການພະລັງງານທົດແທນລາວ (RESDA Lao). ສູນຂອງພວກເຮົາໃຫ້ການບໍລິການຂໍ້ມູນຂ່າວສານ ແລະ ການສຶກສາຄົ້ນຄວ້າດ້ານເສດຖະກິດ-ສັງຄົມ, ເທັກໂນໂລຢີ ແລະ ການກະເສດ. LIRE ພະຍາຍາມປະກອບສ່ວນເຂົ້າໃນການພັດທະນາປະເທດໂດຍການຄົ້ນຫາຄວາມອາດສາມາດທາງດ້ານການຄ້າເພື່ອສ້າງທາງເລືອກໃໝ່ໃນໄລຍະຍາວເພື່ອການຈັດຕັ້ງປະຕິບັດທີ່ດີຂຶ້ນ.

LIRE ໃຫ້ການຍອມຮັບວ່າ: ມັນມີຄວາມຈຳເປັນ ແລະ ສຳຄັນຢ່າງຍິ່ງທີ່ຈະຕ້ອງສ້າງໃຫ້ມີຄວາມຮູ້-ຄວາມສາມາດດ້ານເທັກໂນໂລຢີດ້ານພະລັງງານທົດແທນໃນລະດັບທ້ອງຖິ່ນເຂົ້າໃນການຈັດຕັ້ງປະຕິບັດ ແລະ ດູແລຮັກສາລະບົບຕ່າງໆເພື່ອການແກ້ໄຂບັນຫາໃນໄລຍະຍາວໃນ ສປປ.ລາວ. ສູນຂອງພວກເຮົາໄດ້ພັດທະນາຊັບພະຍາກອນ ແລະ ຕອບສະໜອງດ້ານການຝຶກອົບຮົມ ແລະ ທັງສະໜັບສະໜູນການປະຍຸກໃຊ້ເທັກໂນໂລຢີດ້ານພະລັງງານທີ່ເປັນທາງເລືອກໃໝ່ໄປສູ່ການນຳໃຊ້ໃນລະດັບຊຸມຊົນພາຍໃຕ້ຮູບການການສຶກສາຮຽນຮູ້ຮ່ວມກັນ.

ການສຶກສາຄົ້ນຄວ້າສ່ວນໃຫຍ່ທີ່ຈັດຕັ້ງປະຕິບັດໂດຍ LIRE ໃນໄລຍະຜ່ານມາຈົນເຖິງປະຈຸບັນ ແມ່ນໄດ້ຖືກດຳເນີນການໂດຍນັກສຶກສາຄົ້ນຄວ້າທີ່ເປັນຄົນລາວ ພາຍໃຕ້ການໃຫ້ການສະໜັບສະໜູນຈາກຊ່ຽວຊານ ແລະ ນັກຄົ້ນຄວ້າຈາກຕ່າງປະເທດ. ນອກຈາກຂະບວນການຖ່າຍທອດຄວາມຮູ້ ແລະ ປະສົບການໄປສູ່ພະນັກງານທີ່ເຮັດວຽກປະຈຳຢູ່ສູນຂອງພວກເຮົາແລ້ວ, ໂຄງການຕ່າງໆຍັງໄດ້ຮັບຜົນປະໂຫຍດຈາກການສຶກສາຢ່າງເລິກເຊິ່ງເຂົ້າໄປໃນເງື່ອນໄຂສະເພາະຂອງປະເທດລາວ ເຊິ່ງໄດ້ເອື້ອອຳນວຍໃຫ້ກັບການສຶກສາຄົ້ນຄວ້າຢູ່ໃນພາກສະໜາມ.

---

## *XI. ການສະແດງຄວາມຮູ້ບຸນຄຸນ*

ຮ່າງນະໂຍບາຍສະບັບນີ້ຈະເກີດຂຶ້ນບໍ່ໄດ້ ຖ້າຫາກບໍ່ໄດ້ຮັບການສະໜັບສະໜູນຈາກໂຄງການສົ່ງເສີມກະສິກຳ (LEAP). ໂຄງການດັ່ງກ່າວໄດ້ຮັບທຶນສະໜັບສະໜູນຈາກອົງການເພື່ອການພັດທະນາ ແລະ ຮ່ວມມືຂອງປະເທດສະວິດເຊີແລນ (SDC) ພາຍໃຕ້ການຈັດຕັ້ງປະຕິບັດຂອງກອງສົ່ງເສີມກະສິກຳ ແລະ ປ່າໄມ້ (NAFES) ແລະ ການຊຸກຍູ້ຊ່ວຍເຫຼືອດ້ານວິຊາການຈາກອົງການ Helvetas ເຊິ່ງເປັນອົງການໜຶ່ງທີ່ບໍ່ສັງກັດລັດຖະບານຂອງປະເທດສະວິດເຊີແລນ.

www.laoex.org www.lao-ire.org